
HOYA
ຫຼັກຈັນຍາບັນ
ເຮັດສິ່ງທີ່ຖືກຕ້ອງ, ໃນທາງທີ່ຖືກຕ້ອງ






# ຂໍ້ຄວາມຈາກ ກ CEO



ຄອບຄົວຂອງກຸ່ມ HOYA ທີ່ຮັກແພງ,

ຕະຫຼອດປະຫວັດສາດອັນຍາວນານຂອງພວກເຮົາ, ກຸ່ມ HOYA ຍັງຄົງຮັກສາຄວາມມຸ?ງໝັ້ນຕໍ່ພາລະກິດຂອງພວກເຮົາ ໃນການສ້າງຜະລິດຕະພັນ ແລະ ການບໍລິການດ້ວຍນະວັດຕະກຳ ແລະ ເຕັກໂນໂລຊີທີ່ສ້າງສັນ. ຈຸດສຸມນັ້ນ?ເຮັດໃຫ້ພວກເຮົາໄດ້ກຳໄລຢ່າງເປັນທຳໃນຖານະບໍລິສັດ ແລະ ປັບປຸງຊີວິດການເປັນຢູ່ຂອງຄົນ. ແຕ່ວິທີທີ່ພວກເຮົາບັນລຸຜົນໄດ້ຮັບເຫຼົ່ານີ້ເປັນສິ່ງສຳຄັນຍິ່ງກວ່າ. ເປັນຄວາມຮັບຜິດຊອບຂອງພວກເຮົາໃນການດຳເນີນທຸລະກິດດ້ວຍຄວາມມຸ່ງໝັ້ນແທ້ຈິງໃນການປະຕິບັດໃຫ້ສອດຄ່ອງຕໍ່ກົດໝາຍ ແລະ ຫຼັກຈັນຍາບັນ ແລະ ປະກອບສ່ວນດ້ານບວກໃຫ້ແກ່ສັງຄົມ. ນອກຈາກນັ້ນ, ພວກເຮົາຕ້ອງປະຕິບັດຕົວໃນທາງທີ່ສະແດງໃຫ້ເຫັນເຖິງຄວາມເຄົາລົບນັບຖື ແລະ ຫ່ວງໃຍຕໍ່ສະມາຊິກທຸກຄົນໃນຄອບຄົວຂອງ HOYA.

ບໍ່ວ່າເວລາຈະປ່ຽນໄປເທົ່າໃດ ຫຼື ພວກເຮົາຈະດຳເນີນທຸລະກິດຢູ່ແຫ່ງໃດ, ມີເປົ້າໝາຍດຽວທີ່ພວກເຮົາຕ້ອງພ້ອມກັນເລັງໃສ່ - ຮັກສາຄວາມໄວ້ເນື້ອເຊື່ອໃຈໃນກຸ່ມ HOYA. ຕົວທ່ານທຸກຄົນມີບົດບາດສຳຄ?ນໃນການຮັບປະກັນຄວາມສຳເລັດຂອງບໍລິສັດ. ການດຳເນີນການຂອງທ່ານມີຜົນກະທົບໃຫຍ່ຫຼວງຕໍ່ການເຕີບໂຕຂອງບໍລິສັດ ແລະ ຕໍ່ວິທີການມອງເບິ່ງພວກເຮົາຈາກບັນດາຜູ້ຖືຮຸ້ນ. ການສຳເລັດການຂາຍ ແລະ ສ້າງຜົນກຳໄລໂດຍອີງໃສ່ການກະທຳທີ່ຜິດກົດໝາຍ ຫຼື ບໍ່ມີຈັນຍາບັນແມ່ນບໍ່ສາມາດຍອມຮັບໄດ້. ເພື່ອໃຫ້ບໍລິສັດໄດ້ຮັບການຍອມຮັບ ແລະ ມີມູນຄ່າສູງຈາກສັງຄົມ, ແຕ່ລະທ່ານຕ້ອງເລືອກສິ່ງທີ່ດີໃນແຕ່ລະມື້ໃນການເຮັດວຽກ - ເຮັດສິ່ງທີ່ຖືກຕ້ອງ, ໃນທາງທີ່ຖືກຕ້ອງ.

ດ້ວຍພະນັກງານໃນຫຼາຍກວ່າ 35 ປະເທດ ແລະ ການເຂົ້າເຖິງດ້ານການຄ້າອີກຫລາຍໆປະເທດ, ປະຈຸບັນການດຳເນີນງານພາຍໃຕ້ມາດຕະຖານລະດັບໂລກໜຶ່ງຊຸດແມ່ນມີຄວາມສຳຄັນກວ່າທີ່ຜ່ານມາ. ດັ່ງນັ້ນ, ພວກເຮົາໄດ້ພັດທະນາຫຼັກຈັນຍາບັນລວມນີ້ ເພື່ອເປັນແນວທາງໃຫ້ພະນັກງານທຸກຄົນຂອງກຸ່ມ HOYA ໃນການຮັ?ກສາຄວາມໄວ້ເນື້ອເຊື່ອໃຈຂອງພະນັກງານ, ລູກຄ້າ ແລະ ຜູ້ຖືຮຸ້ນຂອງພວກເຮົາ. ເຖິງແມ່ນວ່າບໍ່ມີຫຼັກການໃດທີ່ສາມາດກວມເອົາທຸກສະຖານະການທີ່ທ່ານອາດຈະພົບໃນບ່ອນເຮັດວຽກ, ມັນສາມາດສ້າງພື້ນຖານທີ່ເຂັ້ມແຂງທີ່ທ່ານສາມາດເລືອກເອົາຂໍ້ທີ່ດີໄດ້. ຖ້າຫາກຫຼັງຈາກອ້າງອີງຫຼັກຈັນຍາບັນແລ້ວ ທ່ານຍັງມີຄຳຖາມ ຫຼື ຄວາມກັງວົນ, ທ່ານຄວນຍົກບັນຫາຂຶ້ນ ແລະຫາລືກັບຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານ, ພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ ຫຼື ຕິດຕໍ່ ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA.

ຢ່າລືມວ່າ ທ່ານເປັນສະມາຊິກທີ່ມີຄຸນຄ່າຂອງກຸ່ມ HOYA ແລະ ການເລືອກຂອ?ງທ່ານຈະວາງຮາກຖານໃຫ້ກັບຄວາມໄວ້ເນື້ອເຊື່ອໃຈຂອງບໍລິສັດພວກເຮົາ. ຂ້າພະເຈົ້າຄາດຫວັງໃຫ້ທ່ານຈັດການກັບບັນຫາດ້ວຍຄວາມຊື່ສັດ ແລະ ເຮັດວຽກຮ່ວມກັນທຸກມື້ ເພື່ອເຮັດໃນສິ່ງທີ່ຖືກຕ້ອງ. ພວກເຮົາຈະຮ່ວມກັນສ້າງ ແລະ ຮັກສາກຸ່ມບໍລິສັດທີ່ເປັນທີ່ເຄົາລົບນັບຖື ແລະ ຄວນຄ່າແກ່ການໄວ້ເນື້ອເຊື່ອໃຈ.

ຂໍຂອບໃຈອີກຄັ້ງໜຶ່ງສຳລັບການອຸທິດຕົນ ແລະ ການສະໜັບສະໜູນພາລະກິດຂອງ HOYA ຢ່າງຕໍ່ເນື່ອງ. HOYA ຈະສືບຕໍ່ເລັງໃສ່ຄວາມປອດໄພ ແລະ ສະຫວັດດີພາບຂອງເພື່ອນຮ່ວມງານຂອງພວກເຮົາທຸກຄົນ ແລະ ໃຫ້ການບໍລິການອັນດີເລີດແກ່ລູກຄ້າຂອງພວກເຮົາໃນທົ່ວໂລກ. ຂໍໃຫ້ພວກເຮົາເປັນນ້ຳໜຶ່ງໃຈດຽວກັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນເພື່ອບັນລຸເປົ້າໝາຍຮ່ວມກັນຂອງກຸ່ມ HOYA ດ້ວຍການເລັງໃສ່ການເຮ?ດໃນສິ່ງທີ່ຖືກຕ້ອງ.ຖືກຕ້ອງ.



Eiichiro Ikeda

**ຫົວໜ້າຜູ້ບໍລິຫານ, ກຸ່ມ HOYA**






# ພາລະກິດອົງກອນ

ທຸ່ມເທໃຫ້ກັບນະວັດຕະກຳດ້ານເຕັກໂນໂລຊີຂໍ້ມູນຂ່າວສານ, ການດຳລົງຊີວິດ ແລະ ວັດທະນະທຳ, HOYA ເລັງເຫັນໂລກທີ່ທຸກຄົນສາມາດມີຊີວິດທີ່ດີຮ່ວມກັບທຳມະຊາດໄດ້.

## ຄຳໝັ້ນສັນຍາຕໍ່ຜູ້ຖືຮຸ້ນ

HOYA ມຸ່ງໝັ້ນທີ່ຈະເພີ່ມມູນຄ່າຂອງບໍລິສັດດ້ວຍການປັບປຸງຜົນໄດ້ຮັບທາງທຸລະກິດ ແລະ ຮັກສາການເຕີບໃຫຍ່. ເປົ້າໝາຍຂອງພວກເຮົາແມ່ນຈ່າຍເງິນປັນຜົນຢ່າງຍຸດຕິທຳ ແລະ ໃຫ້ຜົນຕອບແທນຈາກການລົງທຶນແກ່ຜູ້ຖືຮຸ້ນຕາມຄວາມຄາດຫວັງຂອງພວກເຂົາ. ພວກເຮົາເປີດເຜີຍຂໍ້ມູນຂອງອົງກອນຢ່າງເຕັມໃຈ ແລະ ເປັນກາງ.

## ຄຳໝັ້ນສັນຍາຕໍ່ລູກຄ້າ

ເປົ້າໝາຍຂອງ HOYA ແມ່ນການສະໜອງຜະລິດຕະພັນ ແລະ ການບໍລິການຄຸນະພາບສູງທີ່ປອດໄພ ແລະ ມອບຄຸນຄ່າທີ່ແທ້ຈິງ. ພວກເຮົາພະຍາຍາມຢ່າງເຕັມທີ່ເພື່ອເພີ່ມຄວາມເພິ່ງພໍໃຈຂອງລູກຄ້າດ້ວຍການປັບປຸງຄຸນະພາບການດຳເນີນງານຂອງພວກເຮົາຢ່າງຕໍ່ເນື່ອງ.

## ຄຳໝັ້ນສັນຍາຕໍ່ພະນັກງານ

HOYA ເຄົາລົບບຸກຄະລິກ ແລະ ຄວາມເປັນຕົວຕົນເອງຂອງພະນັກງານແຕ່ລະຄົນ. ພວກເຮົາສະເໜີໂອກາດໃຫ້ພະນັກງານເພີ່ມຄວາມຄິດລິເລີ່ມ ແລະ ຄວາມຄິດສ້າງສັນໃຫ້ຫຼາຍທີ່ສຸດໃນສະພາບແວດລ້ອມການເຮັດວຽກທີ່ປອດໄພ ແລະ ຕອບສະໜອງຄວາມຕ້ອງການຢ່າງເພິ່ງພໍໃຈ. ພວກເຮົາເຮັດສຸດຄວາມສາມາດ ເພື່ອຮັບປະກັນຊີວິດການເປັນຢູ່ທີ່ດີໃຫ້ແກ່ພະນັກງານຂອງພວກເຮົາ.

## ຄຳໝັ້ນສັນຍາຕໍ່ສັງຄົມ

HOYA ມຸ່ງໝັ້ນທີ່ຈະເປັນອົງກອນພົນລະເມືອງທີ່ມີຄວາມຮັບຜິດຊອບສະເໝີມາ. ພວກເຮົາເຮັດວຽກຢ່າງໜັກ ເພື່ອຮັບປະກັນວ່າກິດຈະກຳຂອງອົງກອນຂອງພວກເຮົາຈະດຳເນີນໄປດ້ວຍຄວາມເຄົາລົບຕໍ່ສິ່ງແວດລ້ອມ. ພວກເຮົາມຸ່ງໝັ້ນຢ່າງຈິງຈັງຕໍ່ການປະຕິບັດຕາມກົດໝາຍ ແລະ ການປະຕິບັດຕາມຫຼັກຈັນຍາທຳ.

## ຫຼັກການການບໍລິຫານ

ເພື່ອໃຫ້ເຂົ້າໃຈທັດສະນະຂອງ HOYA, ພວກເຮົາໄດ້ສ້າງຕັ້ງຫຼັກການບໍລິຫານທີ່ຈະເປັນແນວທາງໃຫ້ທຸກໆການຕັດສິນໃຈ ແລະ ການກະທຳ. ພວກເຮົາແປຫຼັກການເຫຼົ່ານີ້ອອກເປັນການປະຕິບັດທີ່ກໍ່ໃຫ້ເກີດຄວາມໝັ້ນຄົງທາງດ້ານເສດຖະກິດ, ຄວາມກ້າວໜ້າທາງສັງຄົມ ແລະ ຄວາມກ້າວໜ້າດ້ານວັດທະນະທຳ, ແລະ ມຸ່ງໝັ້ນທີ່ຈະໄດ້ຄວາມໄວ້ວາງໃຈຈາກທຸກຄົນທີ່ມີສ່ວນຮ່ວມໃນຄວາມສຳເລັດຂອງພວກເຮົາ.

## ຄວາມທຸ່ມເທໃນການບໍລິຫານນະວັດຕະກຳ

HOYA ມຸ່ງໝັ້ນຢ່າງບໍ່ຢຸດຢັ້ງໃນການສ້າງຄຸນຄ່າໃໝ່ດ້ວຍເຕັກໂນໂລຊີແຫ່ງວັດຕະນະກຳ ແລະ ການສ້າງສັນ. ພວກເຮົາໃຊ້ປະໂຫຍດສູງສຸດຈາກຄວາມກ້າວໜ້າຂອງຍຸກຂໍ້ມູນຂ່າວສານດ້ວຍເຄືອຂ່າຍການບໍລິຫານແບບບໍ່ມີພົມແດນຂອງພວກເຮົາ. ພວກເຮົາມີທັດສະນະແບບບໍ່ມີພົມແດນໃນຂະນະທີ່ເຄົາລົບວັດທະນະທຳ ແລະ ປະເພນີທ້ອງຖິ່ນ.






# ສາລະ ບານ

**ຄຳນຳ** 5
ພວກເຮົາໃຫ້ກຽດຫຼັກຈັນຍາບັນຂອງພວກເຮົາ ........ 6
ພວກເຮົາເຂົ້າໃຈພາລະຄວາມຮັບຜິດຊອບຂອງຕົນເອງ........ 8
ພວກເຮົາແບ່ງປັນຄວາມກັງວົນຂອງພວກເຮົາ ........ 10

**ພວກເຮົາໃຫ້ຄວາມເຄົາລົບຕໍ່ຄົນອື່ນ** 12
ສິດທິມະນຸດ........ 13
ສະຖານທີ່ເຮັດວຽກທີ່ເປັນບວກ ແລະ ມີປະສິດທິຜົນ........ 14
ສຸຂະພາບ ແລະ ຄວາມປອດໄພ........ 15
ການປົກປ້ອງຂໍ້ມູນສ່ວນຕົວ ........ 16
ປົກປ້ອງຂໍ້ມູນທາງທຸລະກິດຂອງຄົນອື່ນ ........ 18

**ພວກເຮົາດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍ** 19
ຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ ແລະ ບໍລິການຂອງພວກເຮົາ........ 20
ການແຂ່ງຂັນທີ່ຍຸດຕິທຳ........ 21
ການຕໍ່ຕ້ານການຕິດສິນບົນ ແລະ ການຕໍ່ຕ້ານການທຸຈະຫຼິດ ........ 23
ການຄ້າສາກົນ ........ 25

**ພວກເຮົາເປັນຄູ່ຮ່ວມທຸລະກິດທີ່ມີຄວາມຮັບຜິດຊອບ** 27
ໜ້າທີ່ຄວາມຮັບຜິດຊອບໃນອຸດສາຫະກຳດູແລສຸຂະພາບ ........ 28
ສາຍພົວພັນກັບຜູ້ສະໜອງ........ 30
ຄວາມຂັດແຍ້ງດ້ານຜົນປະໂຫຍດ........ 31
ຂອງຂວັນ ແລະ ຄວາມບັນເທີງ ........ 33
ສະພາບແວດລ້ອມ ........ 34

**ພວກເຮົາປົກປ້ອງກຸ່ມບໍລິສັດ** 35
ການບັນທຶກທີ່ຖືກຕ້ອງ ........ 36
ຂໍ້ມູນຂອງກຸ່ມ HOYA........ 38
ຊັບສິນຂອງກຸ່ມ HOYA ........ 40
ການຄ້າພາຍໃນ ........ 42
ການສື່ສານທີ່ມີຄວາມຮັບຜິດຊອບ........ 44

**ເອກະສານຊ້ອນທ້າຍ**
ແບບຟອມຢັ້ງຢືນຫຼັກຈັນຍາບັນຂອງກຸ່ມ HOYA (ສຳລັບພະນັກງານ) ........ 45

**ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ** ........ 46

*ຫຼັກຈັນຍາບັນນີ້ບໍ່ແມ່ນສັນຍາສຳຫຼັບການຈ້າງງານ*













# ຄຳນຳ

ຫຼັກຈັນຍາບັນຂອງພວກເຮົາແມ່ນຊັບພະຍາກອນທີ່ສຳຄັນທີ່ຊ່ວຍໃຫ້ພວກເຮົາບັນລຸພາລະກິດ. ຍັງຊ່ວຍພວກເຮົາໃນທຸກການກະທຳທີ່ພວກເຮັດລົງໄປ, ເຮັດສິ່ງທີ່ຖືກຕ້ອງ, ໃນທາງທີ່ຖືກຕ້ອງ.

ພວກເຮົາໃຫ້ກຽດຫຼັກຈັນຍາບັນຂອງພວກເຮົາ ................ 6
ພວກເຮົາເຂົ້າໃຈພາລະຄວາມຮັບຜິດຊອບຂອງຕົນເອງ......... 8
ພວກເຮົາແບ່ງປັນຄວາມກັງວົນຂອງພວກເຮົາ ................ 10








# ພວກເຮົາໃຫ້ກຽດຫຼັກຈັນຍາບັນຂອງພວກເຮົາ

ເພື່ອໃຫ້ສອດຄ່ອງກັບນະໂຍບາຍ ແລະ ຄ່ານິຍົມພື້ນຖານຂອງກຸ່ມ HOYA (ດັ່ງທີ່ໄດ້ກ່າວໄວ້ໃນ ພາລະກິດ ແລະ ຫຼັກການບໍລິຫານຂອງອົງກອນນັ້ນ), ຫຼັກຈັນຍາບັນຂອງ HOYA ("ຈັນຍາບັນ") ໄດ້ກຳນົດແນວທາງພື້ນຖານທີ່ພວກເຮົາທຸກຄົນຕ້ອງຍຶດຖື ແລະ ຕ້ອງປະຕິບັດຕາມໃນການປະຕິບັດພາລະໜ້າທີ່ຂອງພວກເຮົາທີ່ກຸ່ມ HOYA.




## *ຫຼັກຈັນຍາບັນຂອງພວກເຮົາໃຊ້ກັບ:*

- ພະນັກງານທຸກຄົນ, ໃນທຸກລະດັບຂອງກຸ່ມບໍລິສັດ. ແຕ່ລະຄົນມີຄວາມຮັບຜິດຊອບໃນການອ່ານ, ທຳຄວາມເຂົ້າໃຈ ແລະ ເຄົາລົບຫຼັກຈັນຍາບັນຂອງ HOYA.
- ພະນັກງານຊົ່ວຄາວ ແລະ ພະນັກງານສັນຍາຈ້າງຢູ່ສະໜາມ, ຜູ້ທີ່ເຮັດວຽກໃຫ້ກຸ່ມ HOYA, ເຖິງວ່າຈະບໍ່ໄດ້ເຮັດວຽກໃຫ້ກັບ HOYA ໂດຍກົງ.

ຄູ່ຮ່ວມທຸລະກິດທີ່ມີຄຸນຄ່າຂອງກຸ່ມ HOYA, ພະນັກງານຊົ່ວຄາວ ແລະ ພະນັກງານສັນຍາຈ້າງກໍຕ້ອງປະຕິບັດໂຕໃຫ້ສອດຄ່ອງກັບຫຼັກຈັນຍາບັນຂອງ HOYA.

### ທີ່ HOYA, ພວກເຮົາ:

- ບໍ່ເຄີຍລະເມີດຫຼັກຈັນຍາບັນ, ເຖິງຫົວໜ້າຄຸມງານ ຫຼື ຜູ້ຈັດການຈະຂໍໃຫ້ເຮັດກໍຕາມ.
- ເສຍສະຫຼະຜົນປະໂຫຍດ ຖ້າມັນໝາຍເຖິງການລະເມີດຫຼັກຈັນຍາບັນ.
- ຢ່າປ່ອຍໃຫ້ການກະທຳຂອງບໍລິສັດອື່ນມີອິດທິພົນຕໍ່ຄຳໝັ້ນສັນຍາທີ່ພວກເຮົາມີຕໍ່ຫຼັກຈັນຍາບັນ.








## ຈະເກີດຫຍັງຂຶ້ນຖ້າໃຜຜູ້ໜຶ່ງລະເມີດຫຼັກຈັນຍາບັນ?

ພະນັກງານຄົນໃດກໍຕາມທີ່ລະເມີດຫຼັກຈັນຍາບັນ ຫຼື ຊຸກຍູ້ໃຫ້ຄົນອື່ນລະເມີດ, ຫຼື ຜູ້ທີ່ເຮັດເປັນຫູໜວກຕາບອດຕໍ່ການລະເມີດຫຼັກຈັນຍາບັນ, ອາດຈະຖືກລົງວິໄນຕໍ່ການກະທຳນັ້ນຕາມຫຼັກ ແລະ ຄວາມຮ້າຍແຮງຂອງການລະເມີດ. ສຳລັບເຈົ້າໜ້າທີ່ ຫຼື ຜູ້ອຳນວຍການ, ການລົງໂທດອາດຈະຮຸນແຮງກວ່າ.

ຖ້າມີຄຳຖາມກ່ຽວກັບ ຫຼັກຈັນຍາບັນຂອງ HOYA ໃນວຽກງານຂອງທ່ານ, ຫຼື ທ່ານເຫັນ ຫຼື ສົງໄສວ່າມີການລະເມີດຫຼັກຈັນຍາບັນ, ທ່ານຕ້ອງປຶກສາຫົວໜ້າຄຸມງານ, ຜູ້ຈັດການ ຫຼື ຜູ້ຊ່ຽວຊານທີ່ຮັບຜິດຊອບໃນເຂດກ່ຽວຂ້ອງທັນທີ (ຕົວຢ່າງ: ພະແນກການເງິນ, ບຸກຄະລາກອນ, ກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ, ສິ່ງແວດລ້ອມ, ຄວບຄຸມການສົ່ງອອກ, ການຢາ ແລະ ອື່ນໆ) ເພື່ອກຳນົດການຈັດການທີ່ເໝາະສົມ.

ຖ້າທ່ານຮູ້ສຶກວ່າທ່ານບໍ່ສາມາດແກ້ບັນຫາໄດ້ພາຍໃນເຂດວຽກຂອງທ່ານ, ຕິດຕໍ່ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA ຫຼື ຊ່ອງທາງການລາຍງານອື່ນໆທີ່ມີໃນທ້ອງຖິ່ນເພື່ອຂໍຄຳແນະນຳ ດີກວ່າຈະປ່ອຍໃຫ້ບັນຫາຜ່ານໄປ. ການລາຍງານໃຫ້ຊ່ອງທາງການລາຍງານດັ່ງກ່າວສາມາດເຮັດໄດ້ແບບບໍ່ອອກນາມ, ເຊິ່ງອະນຸຍາດໃຫ້ໂດຍກົດໝາຍ. ໃນຖານະເປັນກຸ່ມບໍລິສັດ, HOYA ຫ້າມເດັດຂາດບໍ່ໃຫ້ມີການຕອບໂຕ້ຄືນຜູ້ທີ່ລາຍງານຄວາມກັງວົນດ້ວຍຄວາມຫວັງດີ.

### ທ່ານຈະເຮັດແນວໃດ?

**ຈະເຮັດແນວໃດຖ້າເກີດຄວາມຂັດແຍ້ງລະຫວ່າງສິ່ງທີ່ເປັນຫຼັກຈັນຍາບັນ ແລະ ກົດໝາຍໃນປະເທດທີ່ທ່ານເຮັດວຽກ, ແລະ ທ່ານບໍ່ແນ່ໃຈວ່າຈະເຮັດແນວໃດ?**

**ທ່ານຕ້ອງປະຕິບັດຕາມຂໍ້ກຳນົດຢ່າງເຂັ້ມງວດ. ຖ້າບໍ່ຈະແຈ້ງວ່າຂໍ້ກຳນົດໃດເຂັ້ມງວດກວ່າກັນ, ທ່ານຕ້ອງຊອກຫາຄຳແນະນຳຈາກພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ.**






# ພວກເຮົາເຂົ້າໃຈພາລະຄວາມຮັບຜິດຊອບຂອງຕົນເອງ

ສະມາຊິກແຕ່ລະຄົນຂອງກຸ່ມ HOYA ມີໜ້າທີ່ຮອບຜິດຊອບໃນການຮັກສາຊື່ສຽງຂອງພວກເຮົາໃນການດຳເນີນງານຢ່າງຖືກຕ້ອງ ແລະ ມີຈັນຍາທຳ. ເພື່ອໃຫ້ຫຼ້ອມໜ້າທີ່ຄວາມຮັບຜິດຊອບນີ້:

- ພວກເຮົາແຕ່ລະຄົນຕ້ອງສະແດງໃຫ້ເຫັນພຶດຕິກຳໃນສະຖານທີ່ເຮັດວຽກເຊິ່ງສະທ້ອນເຖິງຄ່ານິຍົມຂອງພວກເຮົາ ແລະ ປະຕິບັດຕາມກົດໝາຍ, ກົດເກນ ແລະ ກົດລະບຽບຂໍ້ບັງຄັບ ແລະ ນະໂຍບາຍຂອງກຸ່ມ HOYA (ລວມທັງກົດລະບຽບຂໍ້ບັງຄັບສະເພາະອຸດສາຫະກຳທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງເຮົາ). ພວກເຮົາຕ້ອງປະຕິບັດຕົນໃຫ້ສອດຄ່ອງກັບລະບຽບຂໍ້ບັງຄັບ ແລະ ນະໂຍບາຍຂອງກຸ່ມ HOYA ແລະ ຫຼີກເວັ້ນການແຕ່ງກາຍທີ່ບໍ່ເໝາະສົມ.
- ພວກເຮົາເຂົ້າໃຈວ່າຄຳແນະນຳເຫຼົ່ານີ້ບໍ່ໄດ້ແກ້ບັນຫາໃນທຸກສະຖານະການທີ່ພວກເຮົາອາດຈະປະເຊີນໃນສະຖານທີ່ເຮັດວຽກ. ໃນສະຖານນະການທີ່ເສັ້ນທາງທີ່ຖືກຕ້ອງບໍ່ຈະແຈ້ງ, ພວກເຮົາຕ້ອງຖາມຕົນເອງວ່າ:






ຖ້າທ່ານຕອບວ່າ "**ແມ່ນ**" ສຳລັບຄຳຖາມທັງຫ້າຂໍ້, ອາດຈະເປັນທີ່ຍອມຮັບໄດ້ໃນການລົງມືປະຕິບັດຕໍ່ໄປ. ແຕ່ມີຄຳຕອບໜຶ່ງວ່າ ""**ບໍ່**" ຫຼື "**ບໍ່ແນ່ໃຈ**" ສຳລັບຄຳຖາມຂໍ້ໃດຂໍ້ໜຶ່ງໝາຍຄວາມວ່າທ່ານກໍ່ຕ້ອງຢຸດ, ພິຈາລະນາຄືນ ຫຼື ຊອກຫາຄຳແນະນຳຈາກຫົວໜ້າຄຸມງານ, ຜູ້ຈັດການ, ຫົວໜ້າພະແນກ, ບຸກຄະລາກອນ ຫຼື ພະແນກກົດໝາຍ ຫຼື ພະແນະປະຕິບັດຕາມກົດລະບຽບກ່ອນທີ່ກະດຳເນີນການຕໍ່ໄປ. ຢ່າລືມວ່າການຂໍຄວາມຊ່ວຍເຫຼືອເປັນການເໝາະສົມສະເໝີ, ບໍ່ວ່າຈະຢູ່ພາຍໃຕ້ເຫດການໃດກໍຕາມ.






- ພວກເຮົາບໍ່ຕອບສະໜອງຕໍ່ຄຳຮຽກຮ້ອງໃດໆຈາກອົງກອນອາຊະຍາກຳທີ່ຈັດຕັ້ງຂຶ້ນ.
- ການຕັດສິນໃຈທາງທຸລະກິດທີ່ຕັດສິນໃຈເຮັດ, ໂດຍບໍ່ຄຳນຶງເຖິງຕຳແໜ່ງວຽກງານ, ຕ້ອງເຮັດເພື່ອຜົນປະໂຫຍດສູງສຸດຂອງກຸ່ມ HOYA. ໃນຖານະພະນັກງານ, ພວກເຮົາຕ້ອງຮັບປະກັນວ່າ:
  - ພວກເຮົາດຳເນີນງານໂດຍປາສະຈາກຄວາມຂັດແຍ້ງທາງຜົນປະໂຫຍດ.
  - ພວກເຮົາບໍ່ໃຊ້ຊັບສິນຂອງກຸ່ມ HOYA ໃນທາງທີ່ບໍ່ເໝາະສົມ.
  - ພວກເຮົາປະຕິບັດຕາມຂັ້ນຕອນທີ່ເໝາະສົມຂອງກຸ່ມ HOYA.
  - ພວກເຮົາໄດ້ຮັບອະນຸມັດ ແລະ ຄວາມຮັບຜິດຊອບໃນການຕັດສິນໃຈຂອງພວກເຮົາຢ່າງເຕັມທີ່.

## ຜູ້ນຳມີໜ້າທີ່ຄວາມຮັບຜິດຊອບເພີ່ມຕື່ມ.

ຖ້າທ່ານເປັນຫົວໜ້າຄຸມງານ ຫຼື ຜູ້ຈັດການ, ທ່ານຈະຕ້ອງສ້າງບັນຍາກາດໃນການເຮັດວຽກຢ່າງມີຈັນຍາບັນ. HOYA ຄາດຫວັງໃຫ້ຜູ້ນຳ:

- ເປັນແບບຢ່າງທີ່ດີ, ສະທ້ອນໃຫ້ເຫັນຄ່ານິຍົມຂອງກຸ່ມບໍລິສັດ, ແລະ ສະແດງອອກເຖິງຄວາມມຸ່ງໝັ້ນຕໍ່ຫຼັກຈັນຍາບັນນີ້ດ້ວຍຄຳເວົ້າ ແລະ ການກະທຳ.
- ສ້າງບັນຍາກາດທີ່ຊຸກຍູ້ພຶດຕິກຳທີ່ຖືກຕ້ອງຕາມກົດໝາຍ ແລະ ຈັນຍາບັນທີ່ເປີດໂອກາດໃຫ້ພະນັກງານຖາມຄຳຖາມ ແລະ ຍົກຂໍ້ກັງວົນຂຶ້ນ.
- ສົ່ງເສີມການເຝິກອົບຮົມການປະຕິບັດຕາມຂໍ້ກຳນົດທີ່ຈຳເປັນ ແລະ ຊອກຫາຫຼາຍວິທີສື່ສານດ້ານຄວາມສຳຄັນຂອງການປະຕິບັດຫຼັກຈັນຍາບັນ ແລະ ນະໂຍບາຍອື່ນໆຂອງ HOYA ຫຼື ນະໂຍບາຍພະແນກຂອງພວກເຂົາພາຍໃນ HOYA ໃຫ້ເປັນປົກກະຕິ.
- ລາຍງານການລະເມີດກົດໝາຍ ຫຼື ການປະພຶດທີ່ບໍ່ຖືກຕ້ອງອື່ນໆທີ່ມີລັກສະນະ ແລະ ຂອບເຂດທີ່ສຳຄັນໃຫ້ພະແນກກົດໝາຍທັນທີ.
- ຮັບປະກັນວ່າພະນັກງານ (ລາຍງານໂດຍກົງ ຫຼື ທາງອ້ອມ) ຮູ້ວ່າຈະບໍ່ມີການຕອບໂຕ້ຄືນຕໍ່ການລາຍງານການລະເມີດດ້ວຍຄວາມຫວັງດີ.

## ພວກເຮົາຮັບຮອງຫຼັກຈັນຍາບັນຂອງພວກເຮົາທຸກປີ.

ການອ່ານ, ການທົບທວນຄືນ ແລະ ການອາໄສຫຼັກຈັນຍາບັນຂອງພວກເຮົາເປັນວິທີໜຶ່ງເຊິ່ງພວກເຮົາທຸກຄົນສາມາດສົ່ງເສີມສະຖານທີ່ເຮັດວຽກທີ່ມີຈັນຍາບັນ. ເພື່ອຢັ້ງຢືນວ່າທຸກຄົນເຂົ້າໃຈຫຼັກຈັນຍາບັນ, HOYA ຈະດຳເນີນການສຳຫຼວດ ແລະ ຢັ້ງຢືນປະຈຳປີ ໃນລັກສະນະທີ່ສາມາດນຳໃຊ້ໄດ້ໃນແຕ່ລະປະເທດ. ພະນັກງານຈະໄດ້ຮັບແຫຼ່ງຂໍ້ມູນເພີ່ມຕື່ມ ເພື່ອເພີ່ມຄວາມເຂົ້າໃຈຫຼັກຈັນຍາບັນ, ເຊັ່ນ: ການເຝິກອົບຮົມແບບໂຕຕໍ່ໂຕ ແລະ ແບບໃຊ້ຄອມພິວເຕີ.

ການລົງມືປະຕິບັດຕາມຂັ້ນຕອນຂ້າງເທິງນີ້ຈະໄດ້ຮັບການຢັ້ງຢືນຈາກການກວດສອບພາຍໃນ.

***ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງກຸ່ມ HOYA (HOYA HelpLine Group, HHL Group) ທີ່ສຳນັກງານໃຫຍ່ບໍລິສັດ HOYA ເປັນຜູ້ຮັບຜິດຊອບ ແລະ ບໍລິຫານຫຼັກຈັນຍາບັນຂອງ HOYA. ຫຼັກຈັນຍາບັນບໍ່ສາມາດປັບປຽນໄດ້ ຖ້າຫາກບໍ່ໄດ້ຮັບອະນຸຍາດຈາກ HHL Group.***






# ພວກເຮົາແບ່ງປັນຄວາມກັງວົນຂອງພວກເຮົາ

ພວກເຮົາເຮັດວຽກຮ່ວມກັນ ເພື່ອສົ່ງເສີມສະຖານທີ່ເຮັດວຽກທີ່ມີຈັນຍາບັນ. ການລາຍງານການລະເມີດຈັນຍາບັນຂອງພວກເຮົາແມ່ນໜ້າທີ່ຄວາມຮັບຜິດຊອບຂອງໝົດທຸກຄົນ. ຖ້າທ່ານມີຄຳຖາມກ່ຽວກັບຈັນຍາບັນ ຫຼື ສົງໄສວ່າມີການລະເມີດຫຼັກຈັນຍາບັນຂອງພວກເຮົາ, ທ່ານມີແຫຼ່ງຂໍ້ມູນຫຼາຍບ່ອນທີ່ພ້ອມຈະຊ່ວຍທ່ານ.

ເລີ່ມດ້ວຍຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານ. ຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານຢູ່ໃນຕຳແໜ່ງເໝາະສົມທີ່ສຸດທີ່ຈະເຂົ້າໃຈຄວາມກັງວົນຂອງທ່ານ ແລະ ຈະດຳເນີນການຕາມຄວາມເໝາະສົມ.



ຖ້າທ່ານຮູ້ສຶກບໍ່ສະບາຍໃຈທີ່ຈະເວົ້າກັບຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານ, ທ່ານສາມາດຕິດຕໍ່:

- ສະມາຊິກຄົນອື່ນໃນພະແນກບໍລິຫານ
- ສະມາຊິກຂອງພະແນກບຸກຄະລາກອນ, ກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ
- ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA

## *ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA ແມ່ນຫຍັງ?*

ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA ແມ່ນຊ່ອງທາງການສື່ສານອິດສະຫຼະສຳລັບພະນັກງານຂອງກຸ່ມ HOYA ໃນທີ່ຕັ້ງບໍລິສັດບາງບ່ອນ ເພື່ອລາຍງານການລະເມີດກົດໝາຍ ຫຼື ຫຼັກຈັນຍາບັນຂອງ HOYA ທີ່ອາດຈະເກີດຂຶ້ນ. ບ່ອນທີ່ພ້ອມໃຫ້ບໍລິການ, ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA ຮັບໃຊ້ໃນຖານະແຫຼ່ງຂໍ້ມູນເພີ່ມຕື່ມໃຫ້ກັບສາຍການລາຍງານປົກກະຕິທີ່ມີໃຫ້ພາຍໃນແຕ່ລະບໍລິສັດຂອງກຸ່ມ HOYA.

ຖ້າສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA ມີບໍລິການໃນເຂດຂອງທ່ານ, ທ່ານສາມາດເຂົ້າເຖິງເພື່ອຖາມຄຳຖາມ ຫຼື ແບ່ງປັນຄວາມກັງວົນໄດ້. ເມື່ອທ່ານຕິດຕໍ່ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA:

- ທ່ານອາດຈະເວົ້າໃນພາສາຂອງທ່ານເອງ ໂດຍໃຊ້ຊ່ອງທາງໂທລະສັບທີ່ມີໃນເຂດຂອງທ່ານ ຫຼື ສົ່ງແບບຟອມລາຍງານອອນລາຍ ຫຼື ດ້ວຍການສົ່ງອີເມວ.
- ຄວາມກັງວົນຂອງທ່ານຈະຖືກບັນທຶກເກັບກຳໄວ້ເປັນລາຍລະອຽດ ແລະ ຈະຖືກລາຍງານເຖິງ ທີມງານຂອງສາຍດ່ວນໃຫ້ຄວາມຊ່ວຍເຫຼືອພາຍໃນຂອງ HOYA ເພື່ອການສືບສວນ.
- ທ່ານສາມາດກັບມາກວດສອບເພື່ອກວດເບິ່ງຄວາມຄືບໜ້າຂອງການສືບສວນ ຫຼື ເພື່ອລາຍງານຂໍ້ມູນເພີ່ມຕື່ມທີ່ທ່ານອາດຈະມີ.
- ພວກເຮົາມີຄວາມໝັ້ນໃຈທີ່ຮູ້ວ່າຄວາມກັງວົນຂອງທ່ານຈະໄດ້ຮັບການແກ້ໄຂຢ່າງທັນການ ແລະ ຮອບຄອບ.






## *ກ້າວອອກມາຢ່າງບໍ່ຢ້ານກົວ.*

ທ່ານສາມາດລາຍງາຍຄວາມກັງວົນຂອງທ່ານແບບບໍ່ອອກນາມ, ຍົກເວັ້ນວ່າຖືກບັງຄັບດ້ວຍກົດໝາຍທ້ອງຖິ່ນ. ຖ້າທ່ານໃຫ້ຊື່ຂອງທ່ານ, ພວກເຮົາຈະພະຍາຍາມທຸກວິທີທາງເພື່ອປົກປ້ອງທ່ານຖ້າທ່ານຂໍ. ແຕ່ວ່າ ໃນບາງກໍລະນີ, ອາດຈະເປັນໄປບໍ່ໄດ້ທີ່ຈະຮັກສາທ່ານໃຫ້ເປັນຄວາມລັບຍ້ອນລັກສະນະຂອງການສືບສວນ, ຄວາມຕ້ອງການໃນການສືບສວນຢ່າງລະອຽດ ຫຼື ຂໍ້ກຳນົດບາງຢ່າງດ້ານກົດໝາຍ.

ຖ້າທ່ານມີສ່ວນກ່ຽວຂ້ອງກັບການສືບສວນການປະຕິບັດໃນດ້ານໃດດ້ານໜຶ່ງ (ເຊັ່ນ: ເປັນພະຍານ), ທ່ານບໍ່ອາດຈະປຶກສາການສືບສວນກັບໃຜໄດ້ນອກຈາກຜູ້ທີ່ທຳການສືບສວນ, ຍົກເວັ້ນວ່າໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ສືບສວນ. ທ່ານຕ້ອງໃຫ້ການຮ່ວມມືດ້ວຍຄວາມບໍລິສຸດໃຈກັບການສືບສວນ ແລະ ໃຫ້ຄຳຕອບທີ່ເປັນຄວາມຈິງໃຫ້ກັບແຕ່ລະຄຳຖາມທີ່ທີມງານສືບສວນຖາມ.

## *ກຸ່ມ HOYA ຫ້າມບໍ່ໃຫ້ມີການຕອບໂຕ້ຄືນເດັດຂາດ.*

HOYA ບໍ່ອະນຸຍາດໃຫ້ມີການຕອບໂຕ້ຄືນຕໍ່ຜູ້ທີ່ລາຍງານຄວາມກັງວົນດ້ານການປະຕິບັດຕາມກົດລະບຽບ ແລະ ຄວາມຊື່ສັດດ້ວຍຄວາມຫວັງດີ. ໃຜກໍຕາມທີ່ເຂົ້າຮ່ວມໃນການຕອບໂຕ້ຄືນຈະຖືກລົງໂທດທາງວິໄນເຊິ່ງອາດຈະລວມເຖິງການໄລ່ອອກຈາກວຽກ. ຖ້າທ່ານເຊື່ອວ່າທ່ານ ຫຼື ພະນັກງານຄົນອື່ນຖືກຕອບໂຕ້ຄືນຍ້ອນການລາຍງານດ້ວຍຄວາມຫວັງດີ ຫຼື ລະເມີດກົດໝາຍ, ກົດລະບຽບ, ນະໂຍບາຍ ຫຼື ຈັນຍາບັນ, ຕິດຕໍ່ພະແນກປະຕິບັດຕາມກົດລະບຽບ ຫຼື ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA ທັນທີທີ່ມີບໍລິການ ແລະ ກົດໝາຍອະນຸຍາດ.

## *ພວກເຮົາໃຫ້ຄວາມສຳຄັນກັບການລະເມີດຢ່າງຈິງຈັງ.*

ອາດຈະມີການລົງໂທດທາງວິໄນ, ລວມເຖິງການໃຫ້ອອກຈາກວຽກຂອງພະນັກງານ HOYA ທີ່ລະເມີດກົດໝາຍ, ກົດລະບຽບ, ຫຼັກຈັນຍາບັນນີ້ ຫຼື ນະໂຍບາຍ ຫຼື ຂັ້ນຕອນຕ່າງໆຂອງພວກເຮົາ. ລວມທັງຫົວໜ້າຄຸມງານ ຫຼື ຜູ້ຈັດການຜູ້ທີ່ເມີນເສີຍຕໍ່ການລະເມີດ ຫຼື ຕັ້ງໃຈໃນຄວາມບົກຜ່ອງໃນການກວດຈັບ ຫຼື ຫຼົ້ມເຫຼວໃນການແກ້ໄຂການລະເມີດນັ້ນ. ການບໍລິການ ແລະ ບຸກຄະລາກອນຂອງ HOYA ມີຄວາມຮັບຜິດຊອບໃນການດູແລມາດຕະຖານທາງວິໄນເພື່ອຮັບປະກັນການດຳເນີນການທາງວິໄນຖືກນຳໃຊ້ຢ່າງສະໝ່ຳສະເໝີ, ຕາມທີ່ກົດໝາຍແຮງງານທ້ອງຖິ່ນອະນຸຍາດ.

### ຄວາມກັງວົນ "ດ້ວຍຄວາມຫວັງດີ" ແມ່ນຫຍັງ?

**ມັນໝາຍຄວາມວ່າທ່ານກ້າວອອກມາພ້ອມກັບຄວາມປາຖະໜາດີຢ່າງຈິງໃຈທີ່ຈະໃຫ້ຂໍ້ມູນຢ່າງກົງໄປກົງມາ ແລະ ຖືກຕ້ອງ, ເຖິງວ່າຫຼັງຈາກນັ້ນທ່ານຈະເຫັນວ່າເປັນເລື່ອງເຂົ້າໃຈຜິດກໍຕາມ.**














# ພວກເຮົາໃຫ້ຄວາມເຄົາລົບຕໍ່ຄົນອື່ນ

ພວກເຮົາເປັນທີມພະນັກງານທີ່ທຸ່ມເທໃຫ້ກັບການດຳເນີນວຽກງານໃນຫຼາຍປະເທດທົ່ວໂລກດ້ວຍຄວາມຄິດສ້າງສັນ, ຂັບເຄື່ອນນະວັດຕະກຳ ແລະ ສ້າງຄວາມແຕກຕ່າງໃຫ້ກັບຊີວິດຂອງຜູ້ຄົນທຸກແຫ່ງຫົນ.

ສິດທິມະນຸດ ........ 13
ສະຖານທີ່ເຮັດວຽກທີ່ເປັນບວກ ແລະ ມີປະສິດທິຜົນ ........ 14
ສຸຂະພາບ ແລະ ຄວາມປອດໄພ ........ 15
ການປົກປ້ອງຂໍ້ມູນສ່ວນຕົວ ........ 16
ປົກປ້ອງຂໍ້ມູນທາງທຸລະກິດຂອງຄົນອື່ນ ........ 18






# ສິດທິມະນຸດ

ພວກເຮົາເຄົາລົບເຊິ່ງກັນ ແລະ ກັນ ແລະ ຮັບຮູ້ກຽດສັກສີ ແລະ ຄຸນຄ່າຂອງແຕ່ລະບຸກຄົນ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ໃຫ້ສະພາບແວດລ້ອມໃນການເຮັດວຽກທີ່ພະນັກງານສາມາດເຮັດວຽກໄດ້ດີທີ່ສຸດ. ພວກເຮົາຈຳແນກ ຫຼື ຄຸກຄາມຄົນອື່ນໂດຍອີງໃສ່ເຊື້ອຊາດ, ສັນຊາດ, ເພດ, ສາສະໜາ, ລັດທິ, ການເກີດ, ອາຍຸ, ຄວາມພິການທາງຮ່າງກາຍ ຫຼື ຈິດໃຈ, ຄວາມນິຍົມທາງເພດ ຫຼື ຂໍ້ກຳນົດທາງກົດໝາຍອື່ນໆ.
- ສົ່ງເສີມໃຫ້ສະຖານທີ່ເຮັດວຽກເປັນບ່ອນທີ່ປາສະຈາກການຄຸກຄາມ (ລວມເຖິງການຄຸມຄາມທາງເພດ), ການຂົ່ມຂູ່, ຄວາມຮຸນແຮງ ແລະ ການຂົ່ມເຫັງ.
- ການປົກປ້ອງສິດທິມະນຸດພື້ນຖານ. ພວກເຮົາຫ້າມບໍ່ໃຫ້ມີການໃຊ້ແຮງງານເດັກນ້ອຍ, ການບັງຄັບແຮງງານ ແລະ ການຄ້າມະນຸດພາຍໃນການດຳເນີນງານຂອງພວກເຮົາ ແລະ ຕະຫຼອດເຖິງຕ່ອງໂສ້ການສະໜອງຂອງພວກເຮົາ.
- ເຄົາລົບສິດທິຄອບຄົວຂອງພະນັກງານຂອງພວກເຮົາ. ພວກເຮົາຈະບໍ່ຂົ່ມຂູ່, ໄລ່ອອກ, ຫຼຸດຕຳແໜ່ງ, ຫຼຸດເງິນເດືອນ ຫຼື ຍົກຍ້າຍບຸກຄົນຍ້ອນເຫດຜົນຂອງການຖືພາ, ການເກີດລູກ, ການລາພັກລ້ຽງລູກ ຫຼື ການລາພັກເພື່ອດູແລຜູ້ສູງອາຍຸ.
- ການແບ່ງປັນຄວາມກັງວົນຂອງພວກເຮົາ ຖ້າພວກເຮົາປະສົບ ຫຼື ຮູ້ເຫັນການຈຳແນກ, ການຂົ່ມຂູ່ ຫຼື ການລະເມີດສິດທິມະນຸດ.



### ທ່ານຈະເຮັດແນວໃດ?

**ເພື່ອນຮ່ວມງານຄົນໜຶ່ງຂອງທ່ານສົ່ງອີເມວທີ່ມີເລື່ອງຕະຫຼົກກ່ຽວກັບຄົນບາງສັນຊາດ. ເລື່ອງຕະຫຼົກນີ້ເຮັດໃຫ້ທ່ານບໍ່ສະບາຍໃຈ ແລະ ທ່ານກໍຈະລຶບຖິ້ມເປັນປະຈຳ. ທ່ານສົມຄວນເຮັດຫຍັງກ່ຽວກັບບັນຫານີ້ບໍ່?**

ແມ່ນ. ທ່ານສົມຄວນຂໍໃຫ້ເພື່ອນຮ່ວມງານຂອງທ່ານຢຸດສົ່ງອີເມວ ແລະ ຖ້າການກະທຳຍັງສືບຕໍ່, ຕ້ອງແຈ້ງໃຫ້ຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານ. ພຶດຕິກຳປະເພດນີ້ເປັນການບໍ່ສຸພາບ ແລະ ເປັນອັນຕະລາຍຕໍ່ສິນທຳ ແລະ ສະພາບແວດລ້ອມຂອງທີມງານເຊິ່ງພວກເຮົາທຸກຄົນໄດ້ສ້າງຂຶ້ນ.

**ເມື່ອໄປຢ້ຽມຢາມຜູ້ສະໜອງຄົນໃໝ່, ທ່ານສັງເກດເຫັນວ່າພະນັກງານທີ່ເຮັດວຽກຢູ່ບ່ອນນັ້ນ ເບິ່ງຄືວ່າອາຍຸບໍ່ເຖິງເກນເຮັດວຽກ. ເມື່ອທ່ານຖາມຜູ້ສະໜອງກ່ຽວກັບບັນຫານີ້, ທ່ານບໍ່ໄດ້ຮັບຄຳຕອບທີ່ຈະແຈ້ງ. ຂັ້ນຕອນຕໍ່ໄປຂອງທ່ານຈະແມ່ນຫຍັງ?**

ທ່ານເຮັດສິ່ງທີ່ຖືກຕ້ອງແລ້ວກ່ອນອື່ນໝົດ, ທີ່ຊອມເບິ່ງການລະເມີດສິດທິມະນຸດ ແລະ ອັນທີສອງ, ທ່ານຍົກຄວາມກັງວົນຂຶ້ນຖາມຜູ້ສະໜອງ. ຂັ້ນຕອນຕໍ່ໄປຈະແມ່ນການລາຍງານເຫດການໃຫ້ພະແນກກົດໝາຍ. ພວກເຮົາຢຶດໝັ້ນໃນສິດທິມະນຸດ ແລະ ການກຳຈັດການລະເມີດສິດທິມະນຸດລວມທັງການໃຊ້ແຮງງານເດັກນ້ອຍ.






# ສະຖານທີ່ເຮັດວຽກທີ່ເປັນບວກ ແລະ ມີປະສິດທິຜົນ

ພວກເຮົາສົ່ງເສີມສະພາບແວວລ້ອມການເຮັດວຽກທີ່ເປີດກວ້າງ, ເປັນດ້ານບວກ ແລະ ສົ່ງເສີມມະນຸດສຳພັນທີ່ດີ ເພື່ອສ້າງບັນຍາກາດການເຮັດວຽກທີ່ເປັນມິດ ແລະ ມີການຮ່ວມມື.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ຊ່ວຍເຫຼືອເຊິ່ງກັນ ແລະ ກັນເພື່ອບັນລຸເປົ້າໝາຍ ແລະ ປະສົບຜົນສຳເລັດ. ເຊິ່ງໝາຍຄວາມວ່າ:
  - ພວກເຮົາບໍ່ປະຕິບັດໜ້າທີ່ພາຍໃຕ້ອິດທິພົນຂອງເຫຼົ້າ ຫຼື ຄອບຄອງ, ໃຊ້ ຫຼື ແຈກຢາຍຢາເສບຕິດ ຫຼື ສານຄວບຄຸມທີ່ຜິດກົດໝາຍໃນສະຖານທີ່ຂອງກຸ່ມ HOYA.
  - ພວກເຮົາບໍ່ນຳເອົາອາວຸດປືນ, ມີດ ຫຼື ສິ່ງຂອງອັນຕະລາຍເຂົ້າມາໃນສະຖານທີ່ຂອງກຸ່ມ HOYA.
  - ພວກເຮົາບໍ່ຫຼິ້ນການພະນັນ, ໃຫ້ຢືມເງິນ ຫຼື ຊັກຊວນເພື່ອຮ່ວມງານຂອງພວກເຮົາ ຫຼື ທຸລະກິດຂອງພວກເຮົາໃນຊ່ວງເວລາເຮັດວຽກ ເພື່ອໃຫ້ສະຫຼະເວລາ, ຊັບພະຍາກອນ ຫຼື ເງິນທຶນຂອງພວກເຂົາ.
  - ພວກເຮົາບໍ່ໃຊ້ອຸປະກອນເຝົ້າລະວັງບັນທຶກສຽງ ຫຼື ວິດີໂອໃນສະຖານທີ່ເຮັດວຽກ ຍົກເວັ້ນແຕ່ຈະມີເຫດຜົນດ້ານທຸລະກິດທີ່ຖືກຕ້ອງຕາມກົດໝາຍ, ອຸປະກອນດັ່ງກ່າວເປັນໄປ ຕາມກົດໝາຍທ້ອງຖິ່ນ ແລະ ໄດ້ຮັບອະນຸຍາດຈາກບໍລິສັດ.
- ໃຫ້ກຽດການປະກອບສ່ວນຂອງແຕ່ລະບຸກຄົນ, ດ້ວຍການຮັບຟັງ, ມີສ່ວນຮ່ວມໃນການສົນທະນາທີ່ອິດສະຫຼະ, ເປີດກວ້າງ ແລະ ສ້າງການຮ່ວມມືເຊິ່ງກັນ ແລະ ກັນ.

### ທ່ານຈະເຮັດແນວໃດ?

**ໃນລະຫວ່າງການສຳພາດວຽກ, ມີຄົນສະໝັກວຽກຄົນໜຶ່ງເວົ້າຂຶ້ນວ່າລາວມີລູກສອງຄົນແລ້ວ. ທ່ານຮູ້ວ່າຕຳແໜ່ງງານຈະຕ້ອງການການເຮັດວຽກນອກໂມງການ ສະນັ້ນ ທ່ານຖາມກ່ຽວກັບການກຽມການດູແລລູກ. ອະນຸຍາດໃຫ້ຖາມແບບນັ້ນໄດ້ບໍ່?**

ບໍ່. ປັດໄຈທັງຫຼາຍເຊັ່ນ: ສະຖານະການແຕ່ງງານ, ສະຖານະຄວາມເປັນພໍ່ແມ່ ແລະ ການຖືພາບໍ່ສາມາດນຳມາພິຈາລະນາໄດ້ເມື່ອທຳການຕັດສິນໃຈໃນການຮັບຄົນເຂົ້າເຮັດວຽກ. ແຕ່ວ່າ, ອະນຸຍາດໃຫ້ບອກຜູ້ສະໝັກງານໄດ້ວ່າມີຄວາມຄາດຫວັງໃຫ້ສາມາດເຮັດວຽກນອກໂມງການສຳລັບຕຳແໜ່ງງານ ແລະ ຖາມວ່າມັນຈະເປັນບັນຫາສຳລັບລາວບໍ່.

**ທ່ານຫາກໍໄດ້ຮັບການບົ່ງມະຕິວ່າມີອາການປ່ວຍທີ່ເຮັດໃຫ້ການປະຕິບັດໜຶ່ງໃນໜ້າທີ່ປະຈຳຂອງທ່ານມີຄວາມຫຍຸ້ງຍາກ. ທ່ານຈະເຮັດແນວໃດ?**

HOYA ມຸ່ງໝັ້ນທີ່ຈະຈັດຫາທີ່ພັກທີ່ສົມເຫດສົມຜົນແກ່ຜູ້ທີ່ມີຄຸນສົມບັດເໝາະສົມກັບວຽກແຕ່ມີຄວາມພິການ. ທ່ານຕ້ອງແຈ້ງໃຫ້ຫົວໜ້າຄຸມງານຂອງທ່ານ ຫຼື ພະແນກບຸກຄະລາກອນກ່ຽວກັບພາວະຂອງທ່ານ ເພື່ອພວກເຂົາຈະສາມາດປຶກສາທີ່ຢູ່ອາໄສກັບທ່ານ.






# ສຸຂະພາບ ແລະ ຄວາມປອດໄພ

ພວກເຮົາເຫັນຄຸນຄ່າຄວາມພະຍາຍາມຂອງແຕ່ລະບຸກຄົນ ແລະ ໃນການເຮັດວຽກເພື່ອຮັບປະຄວາມປອດໄພໃນສະຖານທີ່ເຮັດວຽກ, ກຳຈັດອຸບັດຕິເຫດ ແລະ ໄພພິບັດໃນສະຖານທີ່ເຮັດວຽກ ແລະ ປ້ອງກັນການບາດເຈັບ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ທຳໜ້າທີ່ຂອງພວກເຮົາໃຫ້ດີທີ່ສຸດ ເພື່ອຮັກສາໃຫ້ທຸກຄົນໃນ HOYA ປອດໄພຈາກການບາດເຈັບ ແລະ ເຈັບປ່ວຍ ໂດຍການ:
  - ປະຕິບັດຕາມນະໂຍບາຍຂອງອາຄານບ່ອນທີ່ທ່ານເຮັດວຽກ, ຮັກສາບ່ອນເຮັດວຽກໃຫ້ສະອາດ ແລະ ຖືກສຸຂະອະນາໄມ ແລະ ປະຕິບັດຕາມຫຼັກການຄວາມປອດໄພຕະຫຼອດເວລາ.
  - ເຂົ້າຮ່ວມໃນການເຝິກອົບຮົມ ແລະ ການເຝິກຊ້ອມ. ພວກເຮົາລະວັງບໍ່ໃຫ້ນຳໃຊ້ເຄື່ອງຈັກ ຫຼື ອຸປະກອນທີ່ພວກເຮົາບໍ່ອະນຸມັດ ຫຼື ບໍ່ໄດ້ຮັບການເຝິກອົບຮົມ.
  - ປະຕິບັດຕາມກົດລະບຽບຄວາມປອດໄພ ແລະ ການຮັກສາສຸຂະພາບໃນໜ້າການເຮັດວຽກ. ພວກເຮົາໃສ່ອຸປະກອນຮັກສາຄວາມປອດໄພຕາມຄຳແນະນຳ, ຢູ່ຫ່າງຈາກເຂດອັນຕະລາຍ ແລະ ກວດກາເບິ່ງຄວາມປອດໄພຂອງອຸປະກອນ.
  - ປ້ອງກັນການເຮັດວຽກໜັກຈົນເກີນໄປ ເຊິ່ງສາມາດເຮັດໃຫ້ມີຄວາມສ່ຽງໃນຄວາມປອດໄພຂອງບຸກຄົນ.
  - ດຳເນີນມາດຕະການເພື່ອປົກປ້ອງພະນັກງານ ໂດຍການປ້ອງກັນຜູ້ທີ່ເຈັບເປັນບໍ່ໃຫ້ເຂົ້າມາໃນສະຖານທີ່ເຮັດວຽກ.
- ໃຫ້ກຽດເຊິ່ງກັນ ແລະ ກັນດ້ວຍການເຄົາລົບກົດໝາຍແຮງງານ (ເຊັ່ນ: ການລາພັກເພື່ອເບິ່ງແຍງລູກ, ການລາພັກເພື່ອເບິ່ງແຍງຄອບຄົວ, ການລາໄປພັກຜ່ອນ).
- ບັນທຶກຊົ່ວໂມງການເຮັດວຽກໃຫ້ຖືກຕ້ອງ ພວກເຮົາບໍ່ເຮັດວຽກລ່ວງເວລາໂດຍບໍ່ຮັບຄ່າຕອບແທນ ຫຼື ປ່ອຍໃຫ້ຜູ້ອື່ນເຮັດແບບນັ້ນ.
- ຫ້າມເອົາວັດຖຸອັນຕະລາຍ ຫຼື ສານອັນຕະລາຍ ຫຼື ສານເຄມີອື່ນໆອອກຈາກເຂດທີ່ອະນຸຍາດ ຍົກເວັ້ນມີເຫດຜົນທີ່ຖືກຕ້ອງໃນການເຮັດແບບນັ້ນ ແລະ ໃນກໍລະນີດັ່ງກ່າວ, ພວກເຮົາປະຕິບັດຕາມຂັ້ນຕອນທີ່ກຳນົດຂອງກຸ່ມ HOYA.

### ທ່ານຈະເຮັດແນວໃດ?

**ເພື່ອນຮ່ວມງານຂອງພວກເຮົາແນະນຳໃຫ້ປ່ຽນແປງຂັ້ນຕອນໃນສາຍການຜະລິດເພື່ອເລັ່ງລັດຂັ້ນຕອນ, ແຕ່ວ່າທ່ານກັງວົນວ່າຈະບໍ່ມີຄວາມປອດໄພ. ທ່ານຈະເຮັດແນວໃດ?**

ຢ່າປະນີປະນອມເມື່ອເປັນເລື່ອງຂອງຄວາມປອດໄພ. ໃນຂະນະທີ່ HOYA ເຫັນຄຸນຄ່າ ແລະ ຊຸກຍູ້ໃຫ້ມີການປັບປຸງຢ່າງຕໍ່ເນື່ອງ, ການປ່ຽນແປງໃດໆກ່ຽວກັບຂັ້ນຕອນຂອງພວກເຮົາຕ້ອງໄດ້ຮັບການກວດກາ ແລະ ອະນຸມັດ ເພື່ອຮັບປະກັນວ່າບໍ່ມີຜົນກະທົບດ້ານລົບຕໍ່ພະນັກງານ ຫຼື ຜະລິດຕະພັນຂອງພວກເຮົາ. ທ່ານຄວນຕິດຕໍ່ກັບຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານ ເພື່ອປຶກສາຫາລືກ່ຽວກັບຄຳແນະນຳຂອງເພື່ອນຮ່ວມງານຂອງທ່ານ; ໃນຂະນະດຽວກັນ, ຢ່າປະຕິບັດການປ່ຽນແປງໃດໆໃນຂະບວນການນີ້.






# ການປົກປ້ອງຂໍ້ມູນສ່ວນຕົວ

ພວກເຮົາໃຫ້ຄຸນຄ່າສິດຂອງບຸກຄົນຕໍ່ຄວາມເປັນສ່ວນຕົວ ແລະ ຮັບປະກັນວ່າຂໍ້ມູນໃດໜຶ່ງຈະຖືກເກັບກຳດ້ວຍຄວາມລະມັດລະວັງ ແລະ ຍ້ອນເຫດຜົນທາງທຸລະກິດທີ່ຖືກຕ້ອງ.



## ພວກເຮົາມຸ່ງໝັ້ນທີ່ຈະ:

- ເຂົ້າໃຈປະເພດຂໍ້ມູນທີ່ຖືວ່າເປັນ "ຂໍ້ມູນສ່ວນຕົວ."
- ເຄົາລົບຄວາມເປັນສ່ວນຕົວຂອງເພື່ອນຮ່ວມງານ, ລູກຄ້າ ແລະ ຄູ່ຄ້າທຸລະກິດຂອງພວກເຮົາ, ແລະ ຮັກສາຄວາມໄວ້ວາງໃຈຂອງພວກເຂົາດ້ວຍການຈັດການເກັບຮັກສາຂໍ້ມູນສ່ວນຕົວຂອງພວກເຂົາດ້ວຍຄວາມລະມັດລະວັງ. ຄວນໃຊ້ຄວາມລະມັດລະວັງຍິ່ງຂຶ້ນ ພ້ອມກັບເຄົາລົບຕໍ່ "ຂໍ້ມູນສ່ວນຕົວທີ່ລະອຽດອ່ອນ" ເຊັ່ນ: ເລກບັນຊີທະນາຄານ ຫຼື ຂໍ້ມູນທາງການແພດ.
- ໃຊ້ຂໍ້ມູນສ່ວນຕົວໃນທາງທີ່ໄດ້ຮັບອະນຸຍາດຈາກບຸກຄົນໃຫ້ໃຊ້ເທົ່ານັ້ນ ແລະ ຫ້າມແບ່ງປັນກັບຄົນອື່ນ (ບໍ່ວ່າຈະເປັນພາຍໃນ ຫຼື ພາຍນອກ HOYA) ຍົກເວັ້ນແຕ່ວ່າໄດ້ຮັບອະນຸຍາດ ແລະ ມີຈຸດປະສົງທີ່ຖືກຕ້ອງໃນການເບິ່ງຂໍ້ມູນ.
- ການເກັບກຳ, ການເກັບມ້ຽນ, ການແບ່ງ, ການສົ່ງຕໍ່ ແລະ ການກຳຈັດຂໍ້ມູນສ່ວນຕົວຕ້ອງໃຫ້ຖືກຕ້ອງກັບກົດໝາຍການຮັກສາຂໍ້ມູນສ່ວນຕົວສາກົນ ແລະ ຕ້ອງເຮັດໃນລັກສະນະທີ່ຮັກສາຂໍ້ມູນໃຫ້ປອດໄພ.
- ມີສະຕິລະວັງຕົວຕໍ່ການຈັດການ ຫຼື ການລະເມີດຂໍ້ມູນທີ່ບໍ່ເໝາະສົມ ແລະ ຕິດຕໍ່ພະແນກກົດໝາຍ ຫຼື ການປະຕິບັດຕາມກົດລະບຽບທັນທີ ຖ້າຂໍ້ມູນຖືກຄຸກຄາມ. ພວກເຮົາຮັບຮູ້ວ່າການເປີດເຜີຍຂໍ້ມູນສ່ວນຕົວ - ເຖິງຈະເປັນໂດຍບັງເອີນ - ບໍ່ພຽງແຕ່ສາມາດສ້າງຄວາມບໍ່ສະດວກໃຫ້ແກ່ບຸກຄົນ ແລະ ນຳ ໄປສູ່ຄວາມຮັບຜິດຊອບທາງກົດໝາຍ, ແຕ່ຍັງທຳລາຍຄວາມໄວ້ວາງໃຈໃນກຸ່ມ HOYA ນຳອີກ.






## "ຂໍ້ມູນສ່ວນຕົວ" ແມ່ນຫຍັງ?

ຂໍ້ມູນໃດໜຶ່ງທີ່ສາມາດຖືກນຳມາໃຊ້ເພື່ອລະບຸຜູ້ໃດຜູ້ໜຶ່ງໄດ້, ທັງທາງກົງ ຫຼື ທາງອ້ອມ, ເຊັ່ນວ່າ:

- ຊື່
- ເລກປະຈຳຕົວຂອງພະນັກງານ
- ທີ່ຢູ່ອີເມວ
- ເລກໝາຍໂທລະສັບ

ຖ້າທ່ານບໍ່ແນ່ໃຈວ່າຂໍ້ມູນຖືເປັນຂໍ້ມູນສ່ວນຕົວ ຫຼືບໍ່, ໃຫ້ກວດເບິ່ງກັບພະແນກທີ່ກ່ຽວຂ້ອງກ່ອນທີ່ຈະແບ່ງປັນອອກໄປ.



## ທ່ານຈະເຮັດແນວໃດ?

**ທ່ານໄດ້ຮັບໂທລະສັບຈາກທະນາຍຄວາມຈາກພາຍນອກທີ່ສອບຖາມຂໍ້ມູນກ່ຽວກັບພະນັກງານຄົນໜຶ່ງໃນພະແນກຂອງທ່ານ. ທ່ານຈະໃຫ້ຄຳຕອບແນວໃດ?**

ທ່ານບໍ່ຄວນເອົາຂໍ້ມູນພະນັກງານໃຫ້ຄົນອື່ນໂດຍບໍ່ກວດສອບກ່ອນວ່າມີອະນຸຍາດໃຫ້ເປີດເຜີຍ ຫຼືບໍ່. ທ່ານຄວນຖາມຫົວໜ້າຄຸມງານ, ຜູ້ຈັດການ ຫຼື ພະແນກກົດໝາຍກ່ອນໃຫ້ຂໍ້ມູນ.

**ຄອມພິວເຕີແລັບທັອບຂອງທ່ານຖືກລັກຈາກລົດຂອງທ່ານເວລາທ່ານຈອດຢູ່ຮ້ານຕອນທ່ານກັບບ້ານ. ແມ່ນບັນຫາຂໍ້ມູນສ່ວນຕົວຫຼືບໍ່?**

ຖ້າແລັບທັອບຂອງທ່ານມີຂໍ້ມູນສ່ວນຕົວ, ອາດຈະຖືວ່າເປັນການລະເມີດຄວາມປອດໄພຂອງຂໍ້ມູນ ແລະ ຕ້ອງມີການແຈ້ງເຕືອນການເປີດເຜີຍຂໍ້ມູນ ແລະ ຈົນເຖິງດຳເນີນການແກ້ໄຂ. ເຖິງວ່າທ່ານບໍ່ໄດ້ເກັບຮັກສາຂໍ້ມູນໄວ້ໃນແລັບທັອບຂອງທ່ານ, ຂໍ້ມູນອາດຈະຄັດຕິດໄປນຳອີເມວທີ່ຢູ່ໃນແລັບທັອບຂອງທ່ານ. ທ່ານຄວນຕິດຕໍ່ພະແນກກົດໝາຍ ແລະ IT ທັນທີເພື່ອກຳນົດຂັ້ນຕອນຕໍ່ໄປທີ່ເໝາະສົມ.






# ປົກປ້ອງຂໍ້ມູນທາງທຸລະກິດຂອງຄົນອື່ນ

ພວກເຮົາເຄົາລົບ ແລະ ຮັກສາຂໍ້ມູນລັບທາງທຸລະກິດຂອງຄົນອື່ນ, ເບິ່ງແຍງຄືດັ່ງເປັນຂໍ້ມູນຂອງພວກເຮົາເອງ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ປະຕິບັດຕາມກົດໝາຍລິຂະສິດ ແລະ ກົດໝາຍທີ່ກ່ຽວຂ້ອງທັງໝົດ. ພວກເຮົາບໍ່ເຮັດດັ່ງລຸ່ມນີ້, ຖ້າບໍ່ໄດ້ຮັບອະນຸຍາດ:
  - ສຳເນົາ ຫຼື ນຳໃຊ້ ຊອຟແວຣ໌ ຫຼື ການອອກແບບການຜະລິດຕະພັນອື່ນທີ່ພັດທະນາແລ້ວ ໂດຍບໍລິສັດ ຫຼື ບຸກຄົນອື່ນ.
  - ສຳເນົາ ຫຼື ນຳໃຊ້ຂໍ້ມູນຮູບພາບ ຫຼື ຂໍ້ຄວາມຈາກແຫຼ່ງສື່ ເຊັ່ນ: ອິນເຕີເນັດ
- ການຮັກສາຂໍ້ມູນລັບທາງທຸລະກິດຂອງຄົນອື່ນໃຫ້ປອດໄພ, ນຳມາໃຊ້ໃຫ້ສອດຄ່ອງກັບຂໍ້ກຳນົດຂອງຂໍ້ຕົກລົງການນຳໃຊ້ເທົ່ານັ້ນ.
- ໃຊ້ຄວາມລະມັດລະວັງໃນເວລາທີ່ໄດ້ຮັບຂໍ້ມູນລັບທາງທຸລະກິດ, ກວດສອບໃຫ້ແນ່ໃຈວ່າພວກເຮົາມີສິດນຳໃຊ້ ແລະ ຫ້າມໃຊ້ຂໍ້ມູນທີ່ມີຕົ້ນກຳເນີດທີ່ໜ້າສົງໄສ.
- ຫ້າມກົດດັນຄົນອື່ນ, ລວມທັງພະນັກງານໃໝ່, ໃຫ້ເປີດເຜີຍຂໍ້ມູນລັບທາງທຸລະກິດຈາກນາຍຈ້າງຄົນກ່ອນ.

### ທ່ານຈະເຮັດແນວໃດ?

**ພະນັກງານໃໝ່ຫາກໍເຂົ້າມາຮ່ວມທີມຂອງທ່ານຈາກບໍລິສັດຄູ່ແຂ່ງຂອງພວກເຮົາ. ມັນອາດຈະເປັນສິ່ງທີ່ມີປະໂຫຍດຢ່າງຍິ່ງໃນການແບ່ງປັນຂໍ້ມູນກ່ຽວກັບຂັ້ນຕອນຄຸນະພາບທີ່ລາວໄດ້ພັດທະນາຂຶ້ນສຳລັບບໍລິສັດຄູ່ແຂ່ງ. ຈະເປັນສິ່ງທີ່ຍອມຮັບໄດ້ບໍ່ທີ່ລາວຈະເຮັດແບບນັ້ນ?**

ບໍ່. ເປັນການລະເມີດນະໂຍບາຍຂອງພວກເຮົາ, ລະເມີດຄວາມຮັບຜິດຊອບຂອງລາວທີ່ມີຕໍ່ບໍລິສັດເກົ່າ ແລະ ອາດຈະຂັດກັບກົດໝາຍ. ທ່ານບໍ່ຄວນຖາມຫາ ຫຼື ກົດດັນລາວໃຫ້ເປີດເຜີຍຂໍ້ມູນນີ້. ລາວສາມາດໃຊ້ຄວາມຮູ້ທົ່ວໄປ ແລະ ຄວາມສາມາດທີ່ລາວໄດ້ຮຽນຮູ້ຈາກບໍລິສັດເກົ່າ, ແຕ່ວ່າ ພວກເຮົາບໍ່ສາມາດນຳເອົາສິ່ງທີ່ຖືກສ້າງຂຶ້ນ ແລະ ເປັນຄວາມລັບ ຫຼື ໄດ້ຮັບການປົກປ້ອງຕອນທີ່ພວກເຮົາເຮັດວຽກຢູ່ບ່ອນອື່ນ ເຂົ້າມາໃນ HOYA. ລາວມີຄວາມຮັບຜິດຊອບໃນການປົກປ້ອງຂໍ້ມູນລັບຂອງຜູ້ຈ້າງງານຄົນກ່ອນຂອງລາວ ດັ່ງກ່ຽວກັບພະນັກງານ HOYA ມີຄວາມຮັບຜິດຊອບໃນການປົກປ້ອງສິ່ງທີ່ເປັນຂອງພວກເຮົາ.













# ພວກເຮົາດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍ

ໃນຂະນະທີ່ພວກເຮົາຊຸກຍູ້ຂອບເຂດຂໍ້ຈຳກັດດ້ານເຕັກໂນໂລຊີເພື່ອໃຫ້ອະນາຄົດທີ່ດີຂຶ້ນ, ພວກເຮົາເຄົາລົບ ແລະ ໃຫ້ກຽດກົດໝາຍ ແລະ ກົດລະບຽບຕ່າງໆຂອງອຸດສາຫະກຳຂອງພວກເຮົາກໍຄືໃນປະເທດທີ່ພວກເຮົາດຳເນີນທຸລະກິດຕະຫຼອດມາ.



ຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ ແລະ ບໍລິການຂອງພວກເຮົາ . . . . . 20
ການແຂ່ງຂັນທີ່ຍຸດຕິທຳ . . . . . 21
ການຕໍ່ຕ້ານການຕິດສິນບົນ ແລະ ການຕໍ່ຕ້ານການທຸຈະລິດ . . . . 23
ການຄ້າສາກົນ . . . . . 25







# ຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ ແລະ ບໍລິການຂອງພວກເຮົາ

ພວກເຮົາຮັກສາຄວາມເຊື່ອຖືຂອງລູກຄ້າຂອງພວກເຮົາດ້ວຍການຮັບປະກັນວ່າສິນຄ້າ ແລະ ການບໍລິການຂອງພວກເຮົາໄດ້ມາດຕະຖານ ຫຼື ກາຍມາດຕະຖານພາຍໃນຂອງພວກເຮົາເອງ, ເຊັ່ນກັນກັບມາດຕະຖານທີ່ກຳນົດຂຶ້ນໂດຍອຸດສາຫະກຳຂອງພວກເຮົາ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ເຮັດໃຫ້ໄດ້ຕາມມາດຕະຖານຄຸນນະພາບ ແລະ ການບໍລິການລະດັບສູງໃນທຸກຂັ້ນຕອນຂອງຂະບວນການ, ໂດຍການ:
  - ປ່ຽນແປງ ແລະ ກຳຈັດຄຸນສົມບັດໃດໆໃນລະຫວ່າງຂັ້ນຕອນການວາງແຜນການຜະລິດ ແລະ ການອອກແບບທີ່ອາດຈະເປັນສາເຫດຂອງອຸບັດຕິເຫດ.
  - ລາຍງານຄວາມກັງວົນໃຫ້ກັບຝ່າຍທີ່ກ່ຽວຂ້ອງກ່ຽວກັບຜະລິດຕະພັນໃດໆທີ່ບໍ່ໄດ້ຕາມມາດຕະຖານ ຫຼື ຂໍ້ກຳນົດສະເພາະຂອງພວກເຮົາໃນລະຫວ່າງຂັ້ນຕອນການຜະລິດ ແລະ ການກວດສອບ ແລະ ປ້ອງກັນຜະລິດຕະພັນດັ່ງກ່າວບໍ່ໃຫ້ຖືກສົ່ງອອກໄປ.
  - ລວມເຖິງການແຈ້ງເຕືອນ ຫຼື ການຕັກເຕືອນທີ່ເໝາະສົມໃນຄູ່ມືການນຳໃຊ້ເພື່ອຮັບປະກັນວ່າຜະລິດຕະພັນຈະຖືກນຳໃຊ້ ແລະ ຖືກບຳລຸງຮັກສາຢ່າງປອດໄພ.
  - ເກັບມ້ຽນຜະລິດຕະພັນຢ່າງເໝາະສົມ, ອີງຕາມນະໂຍບາຍ ແລະ ຂັ້ນຕອນຂອງພວກເຮົາ.
  - ລາຍງານການຮ້ອງທຸກກ່ຽວກັບຜະລິດຕະພັນທັນທີ ຕາມຂັ້ນຕອນທີ່ກຳນົດໄວ້.
  - ຮັບການອະນຸມັດດ້ານກົດລະບຽບທັງໝົດກ່ອນ ແລະ ປະຕິບັດພັນທະຕາມກົດລະບຽບທີ່ກ່ຽວຂ້ອງກັບການຕະຫຼາດ ຫຼື ການຂາຍຜະລິດຕະພັນຂອງພວກເຮົາ.
- ມີຄວາມຈິງໃຈ ແລະ ໂປ່ງໃສໃນສິ່ງທີ່ພວກເຮົາບອກລູກຄ້າກ່ຽວກັບຜະລິດຕະພັນ ແລະ ການບໍລິການຂອງພວກເຮົາ - ພວກເຮົາເຂົ້າໃຈວ່າຂໍ້ອ້າງທີ່ເກີນຈິງ ຫຼື ການຄ້ຳປະກັນທີ່ບໍ່ມີພື້ນຖານອາດຈະສ້າງຄວາມຮັບຜິດຊອບທາງກົດໝາຍ ແລະ ເຮັດໃຫ້ຄວາມປອດໄພຂອງລູກຄ້າມີຄວາມສ່ຽງ.

### ທ່ານຈະເຮັດແນວໃດ?

**ໜຶ່ງໃຫ້ຄູ່ສັນຍາຂອງພວກເຮົາຮຽກຮ້ອງໃຫ້ມີການທົດສອບຊ້ຳໃນໄລຍະຕໍ່ມາຂອງຂັ້ນຕອນ. ການກວດສອບກ່ອນນີ້ປາກົດວ່າເປັນການເສຍເວລາ ແລະ ເສຍເງິນ ແລະ ເຮັດໃຫ້ການນຳສົ່ງສິນຄ້າຊັກຊ້າ. ສາມາດຂ້າມການກວດສອບເພີ່ມຕື່ມໄດ້ບໍ່?**

ບໍ່. ເນື່ອງຈາກວ່າໃນສັນຍາຕ້ອງການໃຫ້ມີການທົດສອບທັງສອງ, ການກວດສອບ ແລະ ການຄວບຄຸມຄຸນນະພາບບໍ່ສາມາດປ່ຽນແປງໄດ້ ຖ້າບໍ່ມີ ແລະ ບໍ່ໄດ້ຮັບການອະນຸມັດຈາກລະດັບການບໍລິຫານທີ່ເໝາະສົມ, ກໍຄືການອະນຸມັດຈາກລູກຄ້າຂອງພວກເຮົາ. ການຈົງໃຈນຳສົ່ງສິນຄ້າທີ່ບໍ່ໄດ້ຕາມຂໍ້ກຳນົດຂອງສັນຍາ ຫຼື ຂໍ້ກຳນົດໃນການທົດສອບ ໂດຍບໍ່ໄດ້ຮັບການອະນຸມັດຈາກລູກຄ້າຂອງພວກເຮົາອາດຈະຖືວ່າເປັນການສໍ້ໂກງ ແລະ ເປັນການລະເມີດກົດໝາຍ.

# ການແຂ່ງຂັນທີ່ຍຸດຕິທຳ

ພວກເຮົາແຂ່ງຂັນຢ່າງຈິງຈັງ, ແຕ່ຍຸດຕິທຳ ແລະ ປ່ອຍໃຫ້ຜະລິດຕະພັນທີ່ມີຄຸນນະພາບສູງ (ບໍ່ເຄີຍຜິດຈັນຍາບັນ ຫຼື ຜິດກົດໝາຍ) ເປັນຕົວຂັບເຄື່ອນຄວາມສຳເລັດຂອງພວກເຮົາ.



## ພວກເຮົາມຸ່ງໝັ້ນທີ່ຈະ:

- ສົ່ງເສີມການແຂ່ງຂັນທີ່ຍຸດຕິທຳ ແລະ ເປີດເຜີຍດ້ວຍການປະຕິບັດຕາມກົດໝາຍການແຂ່ງຂັນ, ຕ້ານການຜູກຂາດ ແລະ ຫ້າມການຜູກຂາດໃນທຸກແຫ່ງທີ່ເຮົາດຳເນີນທຸລະກິດ.
- ດຳເນີນການດ້ວຍຄວາມບໍລິສຸດໃຈ ແລະ ສົ່ງສິນຄ້າຕາມສັນຍາໃຫ້ກັບລູກຄ້າ:
  - ພວກເຮົາບໍ່ຮັບການຂາຍໂດຍຜ່ານການຕະຫຼາດທີ່ບໍ່ຍຸດຕິທຳ.
  - ພວກເຮົາຮັບປະກັນວ່າການໂຄສະນາ ແລະ ໂປຣໂມຊັນ ມີຄວາມຈິງ ແລະ ຄົບຖ້ວນ.
  - ພວກເຮົາບໍ່ເຄີຍກ່າວອ້າງສິ່ງທີ່ບໍ່ເປັນຈິງ ແລະ ເຮັດໃຫ້ເຂົ້າໃຈຜິດກ່ຽວກັບຜະລິດຕະພັນຂອງພວກເຮົາ.
  - ພວກເຮົາບໍ່ບັງຄັບລາຄາຂາຍຕໍ່ສະເພາະ ຫຼື ລາຄາຂາຍຕໍ່ທີ່ກະຈາຍໄປໃຫ້ລູກຄ້າ.
- ເຮັດໃຫ້ດີກວ່າຄູ່ແຂ່ງດ້ວຍຄວາມຍຸດຕິທຳ ແລະ ຖືກຕ້ອງຕາມກົດໝາຍ:
  - ພວກເຮົາບໍ່ເຂົ້າຮ່ວມການສົນທະນາກັບຄູ່ແຂ່ງກ່ຽວກັບຫົວຂໍ້ການແຂ່ງຂັນທີ່ລະອຽດອ່ອນ (ເຊັ່ນ: ລາຄາ, ມູນຄ່າ, ປະລິມານການຜະລິດ ຫຼື ເງື່ອນໄຂການຂາຍ).
  - ພວກເຮົາບໍ່ເຂົ້າຮ່ວມໃນຂໍ້ຕົກລົງ ຫຼື ຄວາມເຂົ້າໃຈ - ຢ່າງເປັນທາງການ ຫຼື ບໍ່ເປັນທາງການ - ທີ່ຈະຈຳກັດ (ຫຼື ປາກົດວ່າຈະຈຳກັດ) ການແຂ່ງຂັນ.
  - ພວກເຮົາບໍ່ທຳລາຍຊື່ ແລະ ຊື່ສຽງທີ່ດີຂອງຄູ່ແຂ່ງດ້ວຍການໃສ່ຮ້າຍປ້າຍສີ ຫຼື ທຳລາຍຊື່ສຽງ ຫຼື ຜະລິດຕະພັນ ຫຼື ການບໍລິການຂອງຄູ່ແຂ່ງ.






- ເກັບກຳຂ່າວການຕະຫຼາດ ແລະ ການແຂ່ງຂັນທັນທີ, ໂດຍຜ່ານແຫຼ່ງຂໍ້ມູນສາທາລະນະ (ເຊັ່ນ: ຂ່າວ, ບົດຄວາມ, ໜັງສືພິມການຄ້າ ແລະ ຄຳຄິດເຫັນຈາກລູກຄ້າ). ພວກເຮົາມີຄວາມລະມັດລະວັງທີ່ຈະບໍ່ລະເມີດຂໍ້ມູນລັບ ຫຼື ບິດເບືອນຄວາມຈິງວ່າເຮົາແມ່ນໃຜ ຫຼື ເຮັດວຽກໃຫ້ໃຜ. (ສຳລັບຂໍ້ມູນເພີ່ມຕື່ມ, ເບິ່ງການປົກປ້ອງຂໍ້ມູນທາງທຸລະກິດ ຂອງຄົນອື່ນ ໝວດຂອງຫຼັກຈັນຍາບັນ.)

## ທ່ານຈະເຮັດແນວໃດ?

**ໃນລະຫວ່າງການປະຊຸມສະມາຄົມການຄ້າ, ສອງບໍລິສັດຄູ່ແຂ່ງຂອງພວກເຮົາເລີ່ມການສົນທະນາກ່ຽວກັບອັດຕາກຳໄລທີ່ຕ່ຳຂອງພວກເຂົາ ແລະ ຕຳໜິການຫຼຸດລາຄາຫຼາຍເກີນໄປ. ທ່ານບໍ່ເວົ້າຫຍັງໃນເວລານີ້, ແຕ່ວ່າສອງສາມອາທິດຫຼັງຈາກນັ້ນບໍລິສັດທັງສອງໄດ້ເພີ່ມລາຄາຂຶ້ນ. ທ່ານແປກໃຈວ່າທ່ານຄວນເຮັດສິ່ງໃດສິ່ງໜຶ່ງ ຫຼືບໍ່ ໃນຫ້ອງປະຊຸມເວລາມີການສົນທະນາ.**

ແມ່ນແລ້ວ. ທ່ານຄວນ. ເຈົ້າໜ້າທີ່ອາດຈະສະຫຼຸບວ່າທຸກຄົນໃນຫ້ອງປະຊຸມ -ບໍ່ວ່າຜູ້ທີ່ປະກອບສ່ວນໃນການສົນທະນາ ຫຼືບໍ່ - ໄດ້ຕົກລົງເຫັນດີກັບການແກ້ໄຂລາຄາ, ເຖິງວ່າຈະບໍ່ເຄີຍມີຂໍ້ຕົກລົງຢ່າງເປັນທາງການ. ການກະທຳທີ່ຖືກຕ້ອງໃນສະຖານະການແບບນີ້ຄວນຈະເວົ້າຂຶ້ນວ່າ ການສົນທະນາບໍ່ມີຄວາມເໝາະສົມ ແລະ ອອກຈາກຫ້ອງປະຊຸມ ແລະ ລາຍງານບັນຫານີ້ໃຫ້ພະແນກກົດໝາຍທັນທີ.



# ການຕໍ່ຕ້ານການຕິດສິນບົນ ແລະ ການຕໍ່ຕ້ານການທຸຈະຫຼິດ

ພວກເຮົາເຮັດວຽກດ້ວຍຄວາມຊື່ສັດ ແລະ ມີສິນທຳ ພວກເຮົາບໍ່ໃຫ້ ຫຼື ຮັບສິນບົນ ຫຼື ອະນຸຍາດຄົນອື່ນໃຫ້ ຫຼື ຮັບສິນບົນແທນພວກເຮົາ.



## ພວກເຮົາມຸ່ງໝັ້ນທີ່ຈະ:

- ໄດ້ໄຊຊະນະທາງທຸລະກິດດ້ວຍຂໍ້ດີຂອງຜະລິດຕະພັນ ແລະ ການບໍລິການຂອງພວກເຮົາ.
- ຮັກສານະໂຍບາຍບໍ່ມີການປະນີປະນອມຕໍ່ການຕິດສິນບົນ ຫຼື ການຈ່າຍເງິນກ້ອງໂຕະ.
- ຫຼີກເວັ້ນປາກົດການການຈ່າຍທີ່ບໍ່ເໝາະສົມ, ໂດຍບໍ່ກ່ຽວກັບວ່າເປັນແນວທາງການປະຕິບັດພາຍໃນທ້ອງຖິ່ນ ຫຼື ການກະທຳຂອງບໍລິສັດພາຍໃນທ້ອງຖິ່ນ.
- ຮັກສາບັນຊີ ແລະ ການບັນທຶກບັນຊີໃຫ້ຖືກຕ້ອງເພື່ອໃຫ້ສິ່ງທີ່ເອົາໃຫ້ ແລະ ຮັບເອົາມີຄວາມກະຈ່າງແຈ້ງ ແລະ ອະນຸມັດໂດຍນະໂຍບາຍຂອງພວກເຮົາ.
- ດຳເນີນຕາມບາດກ້າວທີ່ເໝາະສົມໃນການເລືອກຄູ່ຮ່ວມທຸລະກິດຂອງ HOYA, ກວດສອບຜົນງານ ແລະ ຍົກບັນຫາກ່ຽວກັບຂໍ້ສົງໄສໃນການດຳເນີນທຸລະກິດຂອງພວກເຂົາຂຶ້ນມາເວົ້າ.
- ຫ້າມຈ່າຍຄ່າອຳນວຍຄວາມສະດວກ. ຖ້າມີການຮ້ອງຂໍໃຫ້ຈ່າຍຄ່າອຳນວຍຄວາມສະດວກ, ລາຍງານການຮ້ອງຂໍນີ້ໃຫ້ພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ.

### "ສິນບົນ" ແມ່ນຫຍັງ?

ສິ່ງທີ່ມີຄ່າໃດໆທີ່ມອບໃຫ້ຜູ້ໃດຜູ້ໜຶ່ງທັງໃນລັດຖະບານ ຫຼື ພາກເອກະຊົນເພື່ອໃຫ້ໄດ້ (ຫຼື ຮັກສາ) ຄວາມໄດ້ປຽບທາງທຸລະກິດ, ການເງິນ ຫຼື ການຄ້າ. ສິນບົນສາມາດເປັນເງິນສົດ, ແຕ່ກໍສາມາດເປັນຮູບແບບອື່ນໄດ້ເຊັ່ນກັນ. ຂອງຂວັນ, ການຊ່ວຍເຫຼືອ, ການສົ່ງເງິນຄືນ, ຈົນເຖິງການສະເໜີໃຫ້ຢືມເງິນ ຫຼື ສະເໜີໃຫ້ວຽກເຮັດ, ສາມາດຖືວ່າເປັນສິນບົນ ຖ້າເອົາໃຫ້ເພື່ອໃຫ້ໄດ້ການດູແລເປັນພິເສດ ຫຼື ເພື່ອໃຫ້ມີອິດທິພົນໃນການຕັດສິນໃຈ.






## ການຈ່າຍ "ຄ່າອຳນວຍຄວາມສະດວກ" ແມ່ນຫຍັງ?

ການຈ່າຍພຽງເລັກນ້ອຍ (ບາງເທື່ອເອີ້ນວ່າ "ເງິນກ້ອງໂຕະ" ຫຼື "ເງິນເລັ່ງລັດ") ໃຫ້ກັບພະນັກງານລັດຊັ້ນຕ່ຳ ເພື່ອຊຸກຍູ້ເຈົ້າໜ້າທີ່ໃຫ້ດຳເນີນການ ຫຼື ເລັ່ງລັດລະບຽບການດຳເນີນງານ (ເຊັ່ນ: ຂັ້ນຕອນການຍື່ນເອກະສານ ຫຼື ບໍລິການຮັບໂທລະສັບ ຫຼື ການສະໜອງອຳນາດ). HOYA ຫ້າມບໍ່ໃຫ້ມີການຈ່າຍຄ່າອຳນວຍຄວາມສະດວກ.

## ທ່ານຈະເຮັດແນວໃດ?

**ຂ້າພະເຈົ້າສັງເກດເຫັນວ່າການຄາດຫວັງການໃຫ້ຂອງຂວັນເປັນ "ມາລະຍາດຕາມປະເພນີ" ປົກກະຕິໃນປະເທດໃດປະເທດໜຶ່ງ ແຕ່ອາດຈະເຫັນເປັນການຈ່າຍທີ່ບໍ່ເໝາະສົມ ຫຼື ເປັນສິນບົນໃນປະເທດອື່ນ. ເມື່ອຂ້າພະເຈົ້າເດີນທາງ ແລະ ພົບປະກັບລູກຄ້າ, ມັນມີຄວາມໝາຍແນວໃດສຳລັບຂ້າພະເຈົ້າ?**

ທ່ານບໍ່ຄວນຈ່າຍເງິນ ຫຼື ຜົນປະໂຫຍດໃດໆເພື່ອໃຫ້ໄດ້ມາເຊິ່ງຄວາມໄດ້ປຽບທາງທຸລະກິດທີ່ບໍ່ເໝາະສົມ. ແມ້ແຕ່ການແລກປ່ຽນຂອງຂວັນເຊິ່ງເປັນ "ມາລະຍາດຕາມປະເພນີ" ໃນປະເທດຂອງທ່ານເອງ ກໍສາມາດຖືໄດ້ວ່າເປັນການຕິດສິນບົນໃນປະເທດອື່ນ ຖ້າມູນຄ່າຂອງຂອງຂວັນນັ້ນສູງກວ່າມູນຄ່າທີ່ຄວນຈະເປັນ. ທ່ານຕ້ອງປະຕິບັດຕາມນະໂຍບາຍຂອງ HOYA ແລະ ກົດໝາຍທ້ອງຖິ່ນທີ່ກ່ຽວຂ້ອງສະເໝີ. ຖ້າທ່ານບໍ່ແນ່ໃຈວ່າຂອງຂວັນເປັນສິ່ງເໝາະສົມ ຫຼືບໍ່, ທ່ານຄວນປຶກສາກັບພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ.








# ການຄ້າສາກົນ

ພວກເຮົາມຸ່ງໝັ້ນທີ່ຈະດຳເນີນທຸລະກິດດ້ວຍຄວາມຮັບຜິດຊອບໃນການກຳເນີນທຸລະກິດລະຫວ່າງພົມແດນ ແລະ ເຮັດວຽກເພື່ອປ້ອງກັນການລະດົມທຶນຈາກການກໍ່ການຮ້າຍ ແລະ ສິ່ງຄຸກຄາມສັນຕິພາບ ແລະ ຄວາມປອດໄພສາກົນ.



## ພວກເຮົາມຸ່ງໝັ້ນທີ່ຈະ:

- ຮັບຮູ້ ແລະ ປະຕິບັດຕາມລະບຽບຂອງການຄ້າຂາອອກ-ຂາເຂົ້າ - ກໍຄືນະໂຍບາຍ ແລະ ຂັ້ນຕອນຕ່າໆ - ດັ່ງ ທີ່ພວກເຂົາກຳນົດໄວ້ໃນແຕ່ລະປະເທດບ່ອນທີ່ພວກເຮົາເຮັດທຸລະກິດ.
- ຮັກສາບັກທຶກການນຳເຂົ້າ, ສົ່ງອອກ ແລະ ພາສີໃນແຕ່ລະບ່ອນທີ່ HOYA ດຳເນີນທຸລະກິດ.
- ດຳເນີນການກວດສອບສະຖານະ ເພື່ອໃຫ້ແນ່ໃຈວ່າ ພວກເຮົາຮູ້ຈັກຜູ້ໃຊ້ປາຍທາງ ແລະ ຈຸດປະສົງໃນການໃຊ້ຜະລິດຕະພັນຂອງພວກເຮົາ.
- ປະຕິເສດການເຮັດທຸລະກິດກັບປະເທດທີ່ປາກົດໃນລາຍຊື່ທີ່ຖືກຫ້າມລະດັບປະເທດ ແລະ ລະດັບໂລກເນື່ອງຈາກບັນຫາຄວາມປອດໄພ, ຍົກເວັ້ນພວກເຮົາໄດ້ຮັບໃບອະນຸຍາດຖືກຕ້ອງເພື່ອຂາຍໃນປະເທດເຫຼົ່ານັ້ນ.
- ຊ່ວຍປ້ອງກັນ ແລະ ກວດຈັບການຟອກເງິນ ແລະ ການຈັດຫາເງິນທຶນຈາກການກໍ່ການຮ້າຍດ້ວຍການເຝົ້າລະວັງການຊຳລະເງິນທີ່ໜ້າສົງໄສ, ເຊິ່ງລວມມີ:
  - ການຈ່າຍເງິນສົດ.
  - ການຈ່າຍຈາກບັນຊີສ່ວນຕົວແທນທີ່ຈະແມ່ນບັນຊີທຸລະກິດ.
  - ການໂອນເງິນກັບສະຖາບັນການເງິນ ຫຼື ບຸກຄົນທີສາມ ໂດຍບໍ່ມີສາຍສຳພັນທີ່ມີເຫດຜົນກັບລູກຄ້າ ຫຼື ຄູ່ຮ່ວມທຸລະກິດ.






## ທ່ານຈະເຮັດແນວໃດ?

**ຜູ້ສະໜອງຂໍໃຫ້ພວກເຮົາສົ່ງການຊຳລະເງິນໄປຫາທີ່ຢູ່ໃໝ່. ທ່ານສົງໄສວ່າອາດຈະມີສິ່ງທີ່ບໍ່ຖືກກົດໝາຍ ຫຼື ບໍ່ເໝາະສົມເກີດຂຶ້ນ. ທ່ານຄວນແບ່ງປັນຄວາມກັງວົນບໍ່?**

ແມ່ນ. ທ່ານເຮັດຖືກແລ້ວທີ່ສົງໄສ. ອາດຈະເປັນຄວາມພະຍາຍາມໃນການຟອກເງິນ ຫຼື ເປັນການຫຼີກຂໍ້ບັງຄັບທາງກົດໝາຍ. ທ່ານຕ້ອງຕິດຕໍ່ພະແນກການເງິນໂດຍບໍ່ລໍຊ້າ, ໃນລະຫວ່າງນັ້ນ, ບໍ່ຕ້ອງປ່ຽນທີ່ຢູ່ຈົນກວ່າທ່ານໄດ້ຮັບຄຳແນະນຳໃຫ້ປ່ຽນ. ຖ້າເປັນໄປໄດ້, ບໍ່ຕ້ອງມີການພົວພັນຕື່ມກັບຜູ້ສະໜອງກ່ຽວກັບການຮ້ອງຂໍ ຈົນກວ່າໄດ້ຮັບແຈ້ງຈາກພະແນກການເງິນໃຫ້ດຳເນີນການຕິດຕໍ່.

**ຂ້າພະເຈົ້າຊື້ສິນຄ້າຮຽນແບບ ໃນການເດີນທາງໄປເຮັດວຽກ ເພື່ອນຳເອົາມາເປັນຂອງທີ່ລະນຶກ. ຍ້ອນວ່າຂ້າພະເຈົ້າຊື້ຈາກຕ່າງປະເທດ, ຈະເປັນຫຍັງບໍ່ທີ່ຖືກັບມາໃນປະເທດ?**

ບໍ່. ທ່ານຕ້ອງຮູ້ວ່າໃນບາງປະເທດ ມີການຕ້ອງຫ້າມບໍ່ໃຫ້ນຳເອົາສິນຄ້າຮຽນແບບເຂົ້າປະເທດ, ແລະ ບໍ່ພຽງແຕ່ບຸກຄົນເທົ່ານັ້ນ, ບໍລິສັດທີ່ບຸກຄົນສັງກັດຢູ່ກໍອາດຈະຖືກລົງໂທດໂດຍກົດໝາຍທີ່ກ່ຽວຂ້ອງເຊັ່ນກັນ.

**ທ່ານໄດ້ຮັບການສັ່ງຊື້ຂະໜາດໃຫຍ່ຈາກບໍລິສັດທີ່ທ່ານບໍ່ເຄີຍໄດ້ຍິນ ຫຼື ເຮັດທຸລະກິດນຳມາກ່ອນ. ເບິ່ງຄືວ່າພວກເຂົາບໍ່ມີປະສົບການໃນອຸດສາຫະກຳຂອງພວກເຮົາ ແລະ ທີ່ຢູ່ການສົ່ງໃບບິນຂອງພວກເຂົາປາກົດວ່າເປັນທີ່ຢູ່ອາໄສ. ທ່ານຄວນສອບຖາມເພີ່ມຕື່ມກ່ອນດຳເນີນການຕາມການສັ່ງຊື້ ຫຼືບໍ່?**

ແມ່ນ. ທ່ານມີຄວາມຮັບຜິດຊອບທີ່ຕ້ອງຮູ້ປາຍທາງສຸດທ້າຍຂອງສິນຄ້າທັງໝົດເພື່ອໃຫ້ເປັນໄປຕາມກົດໝາຍຄວບຄຸມການສົ່ງອອກ ແລະ ປົກປ້ອງຄວາມກັງວົນດ້ານຄວາມໝັ້ນຄົງຂອງປະເທດ. ທ່ານຕ້ອງສອບຖາມກ່ຽວກັບສາຍທຸລະກິດຂອງພວກເຂົາ, ຜູ້ໃຊ້ປາຍທາງ ແລະ ການນຳໃຊ້ສຸດທ້າຍຂອງສິນຄ້າ. ຖ້າທ່ານຮູ້ສຶກບໍ່ສະບາຍໃຈ, ຕິດຕໍ່ພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ.












# ພວກເຮົາເປັນຄູ່ຮ່ວມທຸລະກິດທີ່ມີຄວາມຮັບຜິດຊອບ

ພວກເຮົາສ້າງ ແລະ ຮັກສາຄວາມສຳພັນທີ່ດີ ແລະ ຄວາມມີປະໂຫຍດຮ່ວມກັນກັບລູກຄ້າ ແລະ ຄູ່ຮ່ວມທຸລະກິດຂອງພວກເຮົາ.





ໜ້າທີ່ຄວາມຮັບຜິດຊອບໃນອຸດສາຫະກຳດູແລສຸຂະພາບ ...... 28
ສາຍພົວພັນກັບຜູ້ສະໜອງ ...... 30
ຄວາມຂັດແຍ້ງດ້ານຜົນປະໂຫຍດ ...... 31
ຂອງຂວັນ ແລະ ຄວາມບັນເທີງ ...... 33
ສະພາບແວດລ້ອມ ...... 34






# ໜ້າທີ່ຄວາມຮັບຜິດຊອບໃນອຸດສາຫະກຳດູແລສຸຂະພາບ

ພວກເຮົາເຂົ້າໃຈວ່າທຸລະກິດບາງຢ່າງຂອງພວກເຮົາດຳເນີນໃນອຸດສາຫະກຳການຮັກສາສຸຂະພາບທີ່ມີການຄວບຄຸມຢ່າງເຂັ້ມງວດ ແລະ ມີໜ້າຄວາມຮັບຜິດຊອບທີ່ເຂັ້ມງວດຫຼາຍຂຶ້ນໃນການປະຕິບັດຕາມຂໍ້ກຳນົດດ້ານຄຸນະພາບການຜະລິດຕະພັນ ແລະ ຄວາມປອດໄພຂອງສິນຄ້າຢ່າງເຄັ່ງຄັດ.




## ພວກເຮົາມຸ່ງໝັ້ນທີ່ຈະ:

- ເຂົ້າໃຈລະບຽບຄວາມຮັບຜິດຊອບຕໍ່ໜ້າທີ່ຂອງພວກເຮົາທັງໝົດ ແລະ ປະຕິບັດຕາມກົດລະບຽບ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງທັງໝົດ.
- ຕິດຕໍ່ພົວພັນກັບຜູ້ຊ່ຽວຊານດ້ານສຸຂະພາບ (healthcare professionals, "HCP"), ເຊິ່ງລວມມີ: ທ່ານໝໍ, ພະຍາບານ, ຜູ້ປະຕິບັດງານດ້ານການພະຍາບານ, ຜູ້ຊ່ວຍທ່ານໝໍ, ຜູ້ບໍລິຫານແຜນປະກັນສຸຂະພາບ, ຜູ້ວັດແທກສາຍຕາ, ແລະ ສະຖາບັນການແພດ, ໂດຍປະຕິບັດຕາມກົດໝາຍ, ກົດລະບຽບ, ມາດຕະຖານອຸດສາຫະກຳ ແລະ ຫຼັກການຂອງສະມາຄົມທີ່ບັງຄັບໃຊ້.
- ຫຼີກເວັ້ນການແຊກແຊງຕໍ່ HCP ໃນການຕັດສິນໃຈທາງການແພດແບບມືອາຊີບກ່ຽວກັບການນຳໃຊ້ຜະລິດຕະພັນ HOYA ໂດຍອີງໃສ່ການສື່ສານທີ່ບໍ່ເໝາະສົມ, ອຸປະກອນການຕະຫຼາດທີ່ບໍ່ໄດ້ຮັບອະນຸຍາດ ຫຼື ການໃຫ້ເງິນຊຸກຍູ້ທີ່ບໍ່ເໝາະສົມ.
- ເປີດເຜີຍການຈ່າຍເງິນຢ່າງຖືກຕ້ອງ ຫຼື ການໂອນການສັ່ງຈ່າຍອື່ນໆໃຫ້ກັບແພດໝໍ, ໂຮງໝໍເຝິກສອນ ແລະ ບຸກຄົນ ຫຼື ກຸ່ມຄົນອື່ນຕາມຂອບເຂດທີ່ກົດໝາຍກຳນົດ.
- ໃຫ້ທຶນການຄົ້ນຄວ້າ ແລະ ການສຶກສາ ແລະ ໃຫ້ຄ່າຕອບແທນຕາມມູນຄ່າການຕະຫຼາດທີ່ຍຸດຕິທຳໂດຍໃຫ້ຖືກຕ້ອງຕາມກົດໝາຍ ແລະ ຂໍ້ບັງຄັບ ແລະ ນະໂຍບາຍ ແລະ ຂັ້ນຕອນຕ່າງໆຂອງ HOYA.
- ຂໍການຊ່ວຍເຫຼືອເມື່ອພວກເຮົາມີຄຳຖາມ.






## ທ່ານຮູ້ບໍ່ວ່າ?

HOYA ປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບທາງການແພດຫຼາຍປະເພດ ໃນປະເທດທີ່ພວກເຮົາດຳເນີນການຢູ່. ລວມມີກົດລະບຽບກ່ຽວກັບ:

- ການຄົ້ນຄວ້າທາງຄລີນິກ
- ການພັດທະນາຜະລິດຕະພັນ
- ການຜະລິດ
- ການສົ່ງເສີມຜະລິດຜະພັນ
- ການປົກປ້ອງຂໍ້ມູນ
- ການພົວພັນກັບລູກຄ້າ
- ການອອກໃບບິນໃຫ້ກັບຜະລິດຕະພັນຂອງພວກເຮົາ ແລະ ການບໍລິການທີ່ກ່ຽວຂ້ອງ

ພວກເຮົາຫ້າມເດັດຂາດບໍ່ໃຫ້ສະເໜີ ຫຼື ສັນຍາຜົນປະໂຫຍດທີ່ບໍ່ເໝາະສົມໃດໆ ໃຫ້ແກ່ຜູ້ຊ່ຽວຊານດ້ານສຸຂະພາບ ເພື່ອຈຸດປະສົງໃນການມີອິດທິພົນຕໍ່ການນຳໃຊ້, ການຊື້ ຫຼື ການແນະນຳຜະລິດຕະພັນຂອງພວກເຮົາ.

## ທ່ານຈະເຮັດແນວໃດ?

**ແພດຄົນໜຶ່ງຢາກໃຫ້ HOYA ຈ່າຍຄ່າເດີນທາງຂອງລາວເພື່ອໄປຢ້ຽມຢາມໂຮງງານ HOYA ທີ່ປະເທດຍີ່ປຸ່ນ. ໃນລະຫວ່າງຢູ່ຍີ່ປຸ່ນ, ລາວຢາກຖືໂອກາດທ່ຽວຊົມສະຖານທີ່ຕ່າງໆໂດຍໃຫ້ HOYA ຮັບຜິດຊອບຄ່າໃຊ້ຈ່າຍ. ອະນຸຍາດໃຫ້ເຮັດບໍ່?**

ບໍ່. ເຖິງວ່າ HOYA ອາດຈະຮັບຈ່າຍຄ່າການເດີນທາງ ແລະ ທີ່ພັກເຊົາທີ່ສົມເຫດສົມຜົນໃຫ້ກັບ HCP ເພື່ອເຂົ້າຮ່ວມໂຄງການ ຫຼື ການປະຊຸມກ່ຽວກັບເຕັກໂນໂລຊີການແພດທີ່ບໍລິສັດຈັດຂຶ້ນພາຍໃຕ້ເງື່ອນໄຂໃດໜຶ່ງ, ຂຶ້ນກັບການອະນຸມັດລ່ວງໜ້າຈາກບໍລິສັດ, ພາກສ່ວນການທ່ຽວຊົມອາດຈະຖືວ່າເປັນຄວາມພະຍາຍາມທີ່ບໍ່ເໝາະສົມທີ່ຈະມີອິດທິພົນຕໍ່ການຕັດສິນໃຈຢ່າງອິດສະຫຼະຂອງແພດ ແລະ ດັ່ງນັ້ນ ຈຶ່ງເປັນສິ່ງຫວງຫ້າມ. ປຶກສາກັບພະແນກກົດໝາຍ ແລະ ພະແນກປະຕິບັດຕາມກົດລະບຽບ ເພື່ອຄຳແນະນຳເພີ່ມຕື່ມໃນສະຖານະການນີ້.






# ສາຍພົວພັນກັບຜູ້ສະໜອງ

ພວກເຮົາເລືອກຜູ້ສະໜອງອີງຕາມຈຸດປະສົງ ແລະ ປັດໄຈທີ່ສາມາດວັດແທກໄດ້ ແລະ ຈາກນັ້ນກໍຕ້ອງຮັບປະກັນວ່າພວກເຂົາສາມາດເຮັດໄດ້ຕາມໜ້າທີ່ຄວາມຮັບຜິດຊອບຂອງພວກເຂົາເພື່ອຊ່ວຍທຸລະກິດ ແລະ ພາລະກິດຂອງກຸ່ມ HOYA.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ເຮັດວຽກກັບຄູ່ຮ່ວມທຸລະກິດຜູ້ທີ່ແບ່ງປັນຄວາມມຸ່ງໝັ້ນທີ່ຈະດຳເນີນທຸລະກິດດ້ວຍຄວາມເປັນທຳ, ມີຄວາມເຂົ້າໃຈຕໍ່ຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນຂອງພວກເຂົາ ແລະ ປົກປ້ອງສິດທິມະນຸດ ແລະ ສິດທິຂັ້ນພື້ນຖານຂອງພະນັກງານ.
- ເລືອກທາງເລືອກທີ່ດີ, ການປະເມີນປັດໄຈຕ່າງໆເຊັ່ນ: ຄຸນະພາບ, ປະສົບການ, ບັນທຶກການຈັດສົ່ງ ແລະ ລາຄາເພື່ອກຳນົດຄູ່ຄ້າທຸລະກິດທີ່ເໝາະສົມສຳລັບກຸ່ມບໍລິສັດ.
- ປະຕິບັດຕໍ່ຄູ່ຮ່ວມທຸລະກິດຂອງພວກເຮົາຢ່າງຍຸດຕິທຳ ແລະ ບໍ່ເຄີຍເອົາປຽບພວກເຂົາໂດຍຜ່ານການບັງຄັບ, ປິດບັງ, ນຳໃຊ້ຕຳແໜ່ງຂອງພວກເຮົາຢ່າງບໍ່ຖືກຕ້ອງ, ການບີບບັງຄັບ, ການສະເໜີຂໍ້ມູນທີ່ບໍ່ຖືກຕ້ອງ, ຫຼື ການຈັດການ ຫຼື ການປະຕິບັດການອື່ນໆທີ່ບໍ່ຍຸດຕິທຳ.
- ຕິດຕາມກວດກາການປະຕິບັດຂອງຜູ້ສະໜອງຂອງພວກເຮົາ ເພື່ອໃຫ້ແນ່ໃຈວ່າມີການບັນທຶກເວລາ ແລະ ວັດສະດຸ ແລະ ການສົ່ງມອບທີ່ຖືກຕ້ອງຕາມມາດຕະຖານຂອງພວກເຮົາ ແລະ ຫຼັກຈັນຍາບັນຜູ້ສະໜອງຂອງ HOYA.
- ເຮັດໜ້າທີ່ຂອງພວກເຮົາເພື່ອຮັບປະກັນວ່າລະບົບຕ່ອງໂສ້ການສະໜອງ ທັງໝົດຂອງພວກເຮົາ, ລວມທັງຜູ້ຮັບເໝົາຍ່ອຍ, ກຳລັງດຳເນີນງານທີ່ມີມາດຕະຖານດ້ານຈັນຍາບັນສູງ.

### ຢາກຮູ້ເພີ່ມຕື່ມບໍ່?

ຫຼັກຈັນຍາບັນຜູ້ສະໜອງຂອງ HOYA

### ທ່ານຈະເຮັດແນວໃດ?

**ທີ່ປຶກສາທີ່ເຮັດວຽກໃຫ້ HOYA ໄດ້ສົ່ງໃບເກັບເງິນທີ່ມີລາຍການຈ່າຍເງິນສົດທີ່ບໍ່ເປັນລະບຽບຮຽບຮ້ອຍ ແລະ ກຳລັງຊອກຫາການຈ່າຍແທນຄືນສຳລັບການຈ່າຍເງິນເຫຼົ່ານີ້. ທ່ານຄວນຕັ້ງຄຳຖາມກ່ຽວກັບໃບເກັບເງິນນີ້ບໍ່?**

ແມ່ນ. ເມື່ອກວດກາການຈ່າຍເງິນສົດ ຫຼື ສິ່ງຂອງຕ່າງໆທີ່ຢູ່ໃນໃບເກັບເງິນ, ທ່ານຄວນຂໍລາຍລະອຽດ ແລະ ໃບຮັບເງິນເພື່ອຢັ້ງຢືນ. ພວກເຮົາມີຄວາມຄາດຫວັງວ່າທີ່ປຶກສາ, ຜູ້ຈຳໜ່າຍ ແລະ ບຸກຄົນທີ່ສາມອື່ນໆຈະມີຄວາມໂປ່ງໃສ ແລະ ຊື່ສັດໃນການເຮັດບັນຊີຂອງພວກເຂົາ, ສະນັ້ນ ຖາມເອົາລາຍລະອຽດ ແລະ ຖ້າທ່ານກັງວົນວ່າມີບາງຢ່າງບໍ່ເໝາະສົມ ຫຼື ບໍ່ຖືກກົດໝາຍ, ຈົ່ງແບ່ງປັນຄວາມກັງວົນຂອງທ່ານທັນທີ.






# ຄວາມຂັດແຍ້ງດ້ານຜົນປະໂຫຍດ

ພວກເຮົາຫຼີກເວັ້ນສະຖານະການທີ່ຜົນປະໂຫຍດ ຫຼື ກິດຈະກຳສ່ວນຕົວອາດຈະຂັດແຍ້ງກັບຄວາມສາມາດຂອງພວກເຮົາໃນການຕັດສິນໃຈຕາມຈຸດປະສົງຂອງ HOYA.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ບໍ່ລໍຊ້າ - ຮູ້ ແລະ ຫຼີກເວັ້ນສະຖານະການທີ່ສາມາດກໍ່ໃຫ້ເກີດຂໍ້ຂັດແຍ້ງ.
- ເປີດເຜີຍຂໍ້ຂັດແຍ້ງທາງຜົນປະໂຫຍດທີ່ອາດຈະເກີດຂຶ້ນໃຫ້ຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານ (ຂຶ້ນກັບສະພາບການຕົວຈິງ, ຂໍ້ຂັດແຍ້ງສ່ວນຫຼາຍສາມາດແກ້ໄຂໄດ້ຖ້າຖືກເປີດເຜີຍໄວ ແລະ ຈັດການຢ່າງເໝາະສົມ).



### ທ່ານຮູ້ບໍ່ວ່າ?

ເປັນໄປບໍ່ໄດ້ທີ່ຈະກຳນົດສະຖານນະການແຕ່ລະປະເພດ ທີ່ມີຂໍ້ຂັດແຍ້ງດ້ານຜົນປະໂຫຍດເກີດຂຶ້ນ, ແຕ່ວ່າມີສະຖານະການທີ່ແນ່ນອນບາງຢ່າງທີ່ນຳໄປສູ່ຂໍ້ຂັດແຍ້ງໜຶ່ງ. ຖ້າທ່ານມີຄຳຖາມ, ກະລຸນາປຶກສາກັບຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານ.

- **ວຽກທີສອງ.** ຮັບການຈ້າງວຽກນອກເວລາ, ເຮັດສັນຍາເພື່ອການບໍລິການ ຫຼື ມີສ່ວນຮ່ວມທຸລະກຳທາງທຸລະກິດກັບຄູ່ແຂ່ງ, ຜູ້ສະໜອງ ຫຼື ລູກຄ້າຂອງ HOYA.
- **ຜົນປະໂຫຍດດ້ານການເງິນ.** ມີຜົນປະໂຫຍດໃນການເປັນເຈົ້າຂອງໃນບໍລິສັດຄູ່ແຂ່ງ, ຜູ້ສະໜອງ, ຜູ້ໃຫ້ການບໍລິການ ຫຼື ລູກຄ້າຂອງ HOYA.
- **ຜົນປະໂຫຍດສ່ວນຕົວ.** ມີອຳນາດໃນການຕັດສິນໃຈໃນທຸລະກຳ ຫຼື ການຕັດສິນໃຈທາງທຸລະກິດຂອງ HOYA ເມື່ອທ່ານ ຫຼື ສະມາຊິກຄອບຄົວອາດຈະມີຜົນປະໂຫຍດສ່ວນຕົວ ຫຼື ການເງິນ.
- **ການພົວພັນສ່ວນຕົວ.** ມີສະມາຊິກຄອບຄົວຜູ້ທີ່ເປັນພະນັກງານ HOYA ຫຼື ພະນັກງານຂອງຄູ່ແຂ່ງ, ຜູ້ສະໜອງ, ຜູ້ໃຫ້ບໍລິການ ຫຼື ລູກຄ້າຂອງ HOYA,
- **ຂອງຂວັນ, ຄວາມບັນເທີງ ແລະ ມາລະຍາດທາງທຸລະກິດ.** ໃຫ້ ຫຼື ຮັບຂອງຂວັນ ຫຼື ສະເໜີໃຫ້ ແມ່ນບໍ່ຕົກຢູ່ໃນຂອບເຂດນະໂບບາຍຂອງພວກເຮົາ.
- **ໂອກາດຈາກທາງນອກ.** ການຂາຍສິນຄ້າ ຫຼື ບໍລິການທີ່ແຂ່ງຂັນກັບສິນຄ້າ ແລະ ບໍລິການຂອງກຸ່ມ HOYA.
- **ການສື່ສານ.** ການກ່າວຄຳປາໄສ ຫຼື ຂຽນບົດຄວາມກ່ຽວກັບຫົວຂໍ້ທີ່ກ່ຽວພັນເຖິງກຸ່ມ HOYA ຫຼື ວຽກງານຂອງທ່ານໃນ HOYA, ໂດຍບໍ່ໄດ້ຮັບອະນຸຍາດລ່ວງໜ້າ.

ບໍ່ແນ່ໃຈວ່າສະຖານະການມີຂໍ້ຂັດແຍ້ງ ຫຼືບໍ່? ຖາມກ່ອນດຳເນີນການ.






## ທ່ານຈະເຮັດແນວໃດ?

**ທ່ານຢາກຮັບວຽກນອກເວລາເພີ່ມໃນທ້າຍອາທິດ. ບໍ່ມີຫຍັງກ່ຽວຂ້ອງກັບວຽກຂອງທ່ານໃນ HOYA ແລະ ຈະໃຊ້ເວລາພຽງສອງສາມເດືອນ. ແມ່ນຂໍ້ຂັດແຍ້ງບໍ່?**

ຂຶ້ນກັບປັດໄຈເຊັ່ນ: ປະເພດຂອງວຽກທີ່ທ່ານຄິດຈະເຮັດ ແລະ ຈຳນວນຊົ່ວໂມງທີ່ທ່ານຕ້ອງເຮັດວຽກ. ແຕ່ວ່າທ່ານຈະຕ້ອງເວົ້າກັບຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານກ່ອນທີ່ຈະຮັບວຽກເພື່ອໃຫ້ແນ່ໃຈວ່າບໍ່ມີຂໍ້ຂັດແຍ້ງ.

**ທ່ານມີສ່ວນໃນທີມຕັດສິນໃຈສຳລັບຜູ້ສະໜອງຄົນໃໝ່ ແລະ ອ້າຍເຂີຍຂອງທ່ານເຮັດວຽກໃຫ້ໜຶ່ງໃນບໍລິສັດທີ່ HOYA ກຳລັງພິຈາລະນາ. ບໍລິສັດຂອງລາວມີຜົນງານທີ່ໜ້າປະທັບໃຈໃນເລື່ອງຂອງການນຳສົ່ງກົງເວລາ ແລະ ລາຄາທີ່ດີທີ່ສຸດ. ທ່ານຈະແນະນຳບໍລິສັດຂອງລາວໄດ້ ຫຼືບໍ່ ເນື່ອງຈາກວ່າມັນຈະເປັນຜົນປະໂຫຍດສູງສຸດຕໍ່ HOYA?**

ແມ່ນ, ແຕ່ທ່ານຕ້ອງມີຄວາມໂປ່ງໃສກ່ຽວກັບຄວາມສຳພັນຂອງທ່ານ.  ແລະ ເຖິງວ່າທ່ານອາດຈະຮູ້ສຶກວ່າທ່ານຊັ່ງຊາຈາກຄວາມຄິດເຫັນທັງໝົດ ແລະ ສາມາດຕັດສິນໃຈໄດ້, ມັນຈະເປັນການດີສຳລັບທ່ານໃນການບັນເທົາຂໍ້ຂັດແຍ້ງດ້ວຍການຍ້າຍຕົນເອງອອກຈາກທີມຕັດສິນໃຈ ເພື່ອທີ່ຈະບໍ່ແນະນຳສິ່ງທີ່ອາດຈະບໍ່ຍຸດຕິທຳ ຫຼື ບໍ່ເໝາະສົມ.

**ລູກຊາຍຂອງເພື່ອນຮ່ວມງານຂອງທ່ານຫາກໍເຂົ້າມາຮ່ວມທີມງານຂອງທ່ານ.ອະນຸຍາດໃຫ້ເຮັດບໍ່?**

ພີ່ນ້ອງສາມາດເຮັດວຽກໃນບໍລິສັດດຽວກັນໄດ້. ຂໍ້ຈຳກັດຂໍ້ດຽວແມ່ນພີ່ນ້ອງບໍ່ຄວນຢູ່ໃນຕຳແໜ່ງຮັບການສະໝັກ, ກວດກາງານ, ມີຜົນຕໍ່ຂໍ້ກຳນົດ ແລະ ເງື່ອນໄຂຂອງການຈ້າງງານ, ເງິນເດືອນ ຫຼື ໂອກາດໃນການເລື່ອນຕຳແໜ່ງ ຫຼື ກ້າວກ່າຍການບໍລິຫານຂອງພີ່ນ້ອງຕົນເອງ.








# ຂອງຂວັນ ແລະ ຄວາມບັນເທີງ

ພວກເຮົາແລກປ່ຽນຂອງຂວັນ ແລະ ຄວາມບັນເທີງໃນມູນຄ່າພໍປະມານເຊິ່ງເປັນຂອງສົມມະນາຄຸນທີ່ສົມເຫດສົມຜົນໃຫ້ກັບມິດຕະພາບຂອງທຸລະກິດ ແລະ ບໍ່ແມ່ນເຈດຕະນາເພື່ອໃຫ້ມີອິດທິພົນຕໍ່ຄົນອື່ນແບບບໍ່ເໝາະສົມ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ຫ້າມໃຫ້ ຫຼື ຮັບຂອງຂວັນ ຫຼື ຄວາມບັນເທີງຖ້າຄວາມຕັ້ງໃຈນັ້ນແມ່ນເພື່ອໃຫ້ມີອິດທິພົນໃນການຕັດສິນໃຈ ຫຼື ເພື່ອການຕອບແທນທາງທຸລະກິດ, ການບໍລິການ ຫຼື ຂໍ້ມູນລັບ.
- ຫ້າມຮ້ອງຂໍຂອງຂວັນ ຫຼື ຄວາມບັນເທີງ.
- ໃຫ້ ຫຼື ຮັບຂອງຂວັນ ແລະ ຄວາມບັນເທີງທີ່ເປັນ:
  - ລາຄາສົມເຫດສົມຜົນ.
  - ຢ່າໃຫ້ແພງ ແລະ ຟຸມເຟືອຍເກີນໄປ.
  - ມີຄວາມສອດຄ່ອງ ກັບນະໂຍບາຍຂອງການໃຫ້ ແລະ ການຮັບຈາກອົງກອນ, ກໍຄືກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງ.
  - ອະນຸມັດໂດຍຫົວໜ້າຄຸມງານ ຫຼື ຜູ້ຈັດການ.
- ປະຕິບັດນະໂຍບາຍທີ່ກ່ຽວຂ້ອງທັງໝົດເມື່ອຈ່າຍ ເພື່ອໃຫ້ກຽດເຈົ້າໜ້າທີ່ຂອງລັດ - ລວມເຖິງ ນະໂຍບາຍຂອງ HOYA ແລະ ນະໂຍບາຍຂອງອົງການລັດຖະບານທີ່ເຈົ້າໜ້າທີ່ສັງກັດຢູ່.
- ບັນທຶກການໃຊ້ຈ່າຍສຳລັບຂອງຂວັນ ແລະ ຄວາມບັນເທີງໃຫ້ຖືກຕ້ອງ.

### ທ່ານຮູ້ບໍ່ວ່າ?

ຕ້ອງມີຄວາມລະມັດລະວັງຫຼາຍຂຶ້ນເມື່ອເຮັດວຽກກັບເຈົ້າໜ້າທີ່ລັດຖະບານ (ລວມເຖິງ ເຈົ້າໜ້າທີ່ເຄິ່ງລັດ ເຊັ່ນ: ພະນັກງານໂຮງໝໍ ຫຼື ມະຫາວິທະຍາໄລທີ່ເປັນຂອງລັດ). ສິ່ງທີ່ອາດຈະອະນຸຍາດສຳລັບລູກຄ້າໃນທຸລະກິດອາດຈະເປັນສິ່ງຜິດກົດໝາຍ ເມື່ອພົວພັນກັບເຈົ້າໜ້າທີ່ລັດຖະບານ.

ຫ້າມເອົາໃຫ້ - ຫຼື ຮັບສິ່ງຂອງມີຄ່າຈາກ - ເຈົ້າໜ້າທີ່ລັດຖະບານ, ຍົກເວັ້ນທ່ານໄດ້ຮັບອະນຸມັດລ່ວງໜ້າຈາກພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ.

### ທ່ານຈະເຮັດແນວໃດ?

**ທ່ານຈະເຮັດແນວໃດຖ້າທ່ານໄດ້ຮັບຂອງຂວັນທີ່ທ່ານຮູ້ວ່າບໍ່ເໝາະສົມ - ທ່ານຄວນເຮັດແນວໃດ?**

ສົ່ງຂອງຂວັນຄືນໃຫ້ຜູ້ໃຫ້ພ້ອມກັບຄຳອະທິບາຍດ້ວຍຄວາມສຸພາບວ່ານະໂຍບາຍຫ້າມທ່ານບໍ່ໃຫ້ຮັບເອົາ. ໃນບາງກໍລະນີ, ຖ້າສົ່ງຂອງຂວັນຄືນອາດຈະບໍ່ເປັນສິ່ງທີ່ເໝາະສົມ ຫຼື ເປັນໄປບໍ່ໄດ້, ທາງເລືອກອື່ນອາດຈະໄດ້ຮັບການພິຈາລະນາ ເຊັ່ນ: ໂຊຂອງຂວັນໃນສະຖານທີ່ສ່ວນລວມ ຫຼື ບໍລິຈາກໃຫ້ກັບອົງການມູນນິທິ. ໃນສະຖານະການແບບນີ້, ປຶກສາກັບຫົວໜ້າຄຸມງານ, ຜູ້ຈັດການ ຫຼື ພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ ກ່ຽວກັບການຈັດການທີ່ເໝາະສົມ.






# ສະພາບແວດລ້ອມ

ພວກເຮົາມຸ່ງໝັ້ນທີ່ຮັກສາສະພາບແວດລ້ອມ, ສົ່ງເສີມຄວາມຍືນຍົງ, ອະນຸລັກຊັບພະຍາກອນ ແລະ ປະຕິບັດຕາມແນວທາງປະຕິບັດທີ່ເປັນມິດຕໍ່ສະພາບແວດລ້ອມໃນການດຳເນີນງານຂອງພວກເຮົາ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ປະຕິບັດຕາມກົດໝາຍ, ກົດລະບຽບ ແລະ ຂໍ້ກຳນົດທັງໝົດກ່ຽວກັບສະພາບແວດລ້ອມ ແລະ ລາຍງານການລະເມີດທີ່ສົງໄສໃຫ້ກັບຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານທັນທີ.
- ກຳຈັດສິ່ງເສດເຫຼືອຢ່າງເໝາະສົມ. ພວກເຮົາຈະບໍ່ຖິ້ມສິ່ງເສດເຫຼືອແບບບໍ່ຖືກກົດໝາຍ.
- ມຸ່ງໝັ້ນເພື່ອຄວາມຍືນຍົງດ້ານສະພາບແວດລ້ອມໃນການດຳເນີນງານຂອງພວກເຮົາໂດຍຜ່ານ:
  - ສືບຕໍ່ການປັບປຸງໃນການຈັດການກັບສະພາບແວດລ້ອມ, ຫຼຸດຜ່ອນສິ່ງເສດເຫຼືອ ແລະ ປ້ອງກັນມົນລະພິດ.
  - ການລວມເອົາການປະຕິບັດດ້ານສິ່ງແວດລ້ອມທີ່ດີເຂົ້າໃນການດຳເນີນທຸລະກິດຂອງພວກເຮົາ, ລວມທັງການຈັດເຄື່ອງ ແລະ ການອອກແບບຜະລິດຕະພັນ, ການທົດລອງ, ການຜະລິດ ແລະ ການສະໜັບສະໜູນ.
  - ການພິຈາລະນາຜົນກະທົບຕໍ່ສິ່ງແວດລ້ອມໃນການພັດທະນາຜະລິດຕະພັນ ຫຼື ຂະບວນການ ແລະ ການເລືອກວັດສະດຸການຜະລິດ.



### ທ່ານຈະເຮັດແນວໃດ?

**ທ່ານມີແນວຄິດສຳລັບວິທີໃຊ້ເຈ້ຍໃຫ້ໜ້ອຍລົງໃນອາຄານຂອງທ່ານ. ທ່ານຈະປຶກສານຳໃຜ?**

HOYA ເປີດຮັບຄວາມຄິດ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສະພາບແວດລ້ອມ. ວິເຄາະແນວຄິດຂອງທ່ານກັບຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານເພື່ອເບິ່ງວ່າພວກເຂົາສາມາດຈັດຕັ້ງປະຕິບັດໄດ້ ຫຼືບໍ່ ໃນສະຖານທີ່ຂອງທ່ານ.















# ພວກເຮົາປົກປ້ອງກຸ່ມບໍລິສັດ

ພວກເຮົາປົກປ້ອງຊັບສິນ, ຂໍ້ມູນ ແລະ ຊື່ສຽງຂອງພວກເຮົາ - ພວກມັນເປັນຕົວຂັບເຄື່ອນວຽກງານທີ່ພວກເຮົາເຮັດ ແລະ ຜູ້ຄົນທີ່ພວກເຮົາຮັບໃຊ້, ໃນທຸກໆມື້.

ການບັນທຶກທີ່ຖືກຕ້ອງ ........ 36
ຂໍ້ມູນຂອງກຸ່ມ HOYA ........ 38
ຊັບສິນຂອງກຸ່ມ HOYA ........ 40
ການຄ້າພາຍໃນ ........ 42
ການສື່ສານທີ່ມີຄວາມຮັບຜິດຊອບ ........ 44






# ການບັນທຶກທີ່ຖືກຕ້ອງ

ພວກເຮົາຮັກສາຄວາມເຊື່ອໝັ້ນຂອງຮຸ້ນສ່ວນໃນກຸ່ມ HOYA ທັງໝົດ (ລວມທັງຜູ້ກວດສອບ, ນັກລົງທຶນ ແລະ ລູກຄ້າ) ດ້ວຍການຮັກສາບັນຊີ ແລະ ການບັນທຶກທີ່ສະທ້ອນເຖິງຖານະການເງິນຂອງກຸ່ມບໍລິສັດຢ່າງຖືກຕ້ອງ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ຮູ້ ແລະ ປະຕິບັດຕາມຂະບວນການພາຍໃນ, ການຄວບຄຸມ ແລະ ນະໂຍບາຍການບັນຊີຂອງພວກເຮົາ.
- ຮັບປະກັນວ່າຂໍ້ມູນທີ່ພວກເຮົາບັນທຶກມີຄວາມຊື່ກົງ, ຄົບຖ້ວນ ແລະ ທັນເວລາ.
- ການຈັດການ, ການເກັບມ້ຽນ ແລະ ການກໍາຈັດຂໍ້ມູນຕາມທີ່ອະທິບາຍໄວ້ໃນນະໂຍບາຍຂອງພວກເຮົາ.
- ຫ້າມບໍ່ໃຫ້ລາຍງານຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບິດເບືອນຈາກຄວາມຈິງ.
- ຫ້າມບໍ່ໃຫ້ຂຽນຄືນ, ລຶບ ຫຼື ທໍາລາຍຂໍ້ມູນຂອງກຸ່ມ HOYA (ລວມທັງ ຂໍ້ມູນດິຈິຕອນ) ເຊິ່ງອາດຈະຈໍາເປັນໃນການສືບສວນ, ກວດສອບ ຫຼື ການດໍາເນີນງານຕາມກົດໝາຍ.
- ກວດເບິ່ງກັບຫົວໜ້າຄຸມງານ ຫຼື ຜູ້ຈັດການຂອງທ່ານກ່ອນເປີດເຜີຍຂໍ້ມູນລັບເພື່ອຕອບຄໍາຖາມຈາກສື່ ຫຼື ແຫຼ່ງທີ່ມາພາຍນອກ HOYA.
- ມີສະຕິລະວັງຕົວຕໍ່ຄວາມບໍ່ສະໝໍ່າສະເໝີ ຫຼື ຄວາມບໍ່ຖືກຕ້ອງ ແລະ ລາຍງານການກະທໍາ ຫຼື ສໍ້ໂກງ ຫຼື ການປະພຶດທີ່ບໍ່ຖືກຕ້ອງດ້ານການເງິນ.
- ລາຍງານໃຫ້ພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ, ສາຍດ່ວນໃຫ້ຄວາມຊ່ວຍເຫຼືອຂອງ HOYA ຫຼື ຊ່ອງທາງການລາຍງານອື່ນໆທັນທີ ຖ້າເຫັນວ່າມີຄວາມກົດດັນຈາກການບໍລິຫານ ເຊິ່ງເປັນຜົນມາຈາກການລາຍງານຄວາມບໍ່ເໝາະສົມ.

### ທ່ານຮູ້ບໍ່ວ່າ?

ພວກເຮົາແຕ່ລະຄົນ, ບໍ່ສໍາຄັນວ່າຈະເປັນວຽກໃດທີ່ພວກເຮົາເຮັດທີ່ HOYA, ລ້ວນແຕ່ມີຄວາມຮັບຜິດຊອບ ເພື່ອຮັກສາການບັນທຶກທີ່ຖືກຕ້ອງ. "ການບັນທຶກ" ສາມາດເປັນ:

- ການລາຍງານຄ່າໃຊ້ຈ່າຍ
- ການບັນທຶກເວລາເຮັດວຽກ
- ການລາຍງານການຜະລິດ
- ໃບສັ່ງຊື້
- ໃບເກັບເງິນ
- ບົດລາຍງານການກວດສອບ ຫຼື ລັດຖະບານ



## ທ່ານຈະເຮັດແນວໃດ?

**ບາງເທື່ອທ່ານເອົາວຽກເມືອເຮັດຢູ່ເຮືອນແລະເຮັດວຽກຈາກຄອມພິວເຕີສ່ວນຕົວຂອງທ່ານ. ຖືກຕ້ອງບໍ່ທີ່ຈະເກັບຮັກສາການບັນທຶກ ແລະ ເອກະສານບາງຢ່າງໃນຄອມພິວເຕີສ່ວນຕົວຢູ່ເຮືອນຂອງທ່ານເປັນຂໍ້ມູນສຳຮອງ?**

ບໍ່. ຫ້າມບໍ່ໃຫ້ເກັບຮັກສາການບັນທຶກ ຫຼື ເອກະສານຂອງ HOYA ໃນຄອມພິວເຕີສ່ວນຕົວຂອງທ່ານຢູ່ເຮືອນ, ເຖິງວ່າຈະເປັນການສຳຮອງກໍຕາມ. ຖ້າບັງເອີນທ່ານດາວໂຫຼດເອົາເອກະສານ HOYA ເຂົ້າໃນຄອມພິວເຕີຢູ່ເຮືອນ, ຕ້ອງແນ່ໃຈວ່າທ່ານລຶບຂໍ້ມູນ, ເຖິງວ່າຈະເປັນພຽງຮ່າງ ຫຼື ເອກະສານທີ່ຢູ່ລະຫວ່າງດຳເນີນການກໍຕາມ.






# ຂໍ້ມູນຂອງກຸ່ມ HOYA

ພວກເຮົາຮັກສາຂໍ້ມູນຂອງ ກຸ່ມ HOYA, ລວມທັງ ບົດບັນທຶກດ້ານທຸລະກິດ ແລະ ການເງິນ ແລະ ຂໍ້ມູນດ້ານເຕັກນິກ ແລະ ປ້ອງກັນຈາກການສູນເສຍ, ການໃຊ້ໃນທາງທີ່ຜິດ ຫຼື ການເຂົ້າ ຫຼື ເປີດເຜີຍທີ່ບໍ່ເໝາະສົມ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ຮັກສາຄວາມລັບຂໍ້ມູນດ້ານຊັບສິນຂອງກຸ່ມ HOYA, ເຊັ່ນ: ຂໍ້ມູນດ້ານເຕັກນິກ, ຂໍ້ມູນດ້ານຜະລິດຕະພັນໃໝ່, ຂໍ້ມູນດ້ານການເງິນທີ່ບໍ່ທັນເຜີຍແຜ່ ແລະ ແຜນການ, ການຄາດການ, ຍຸດທະສາດ ແລະ ນະໂຍບາຍທຸລະກິດ ແລະ ການຕະຫຼາດ.
- ແບ່ງປັນຂໍ້ມູນລັບຂອງກຸ່ມ HOYA ກັບຜູ້ທີ່ໄດ້ຮັບອະນຸຍາດ ແລະ ຜູ້ທີ່ມີຄວາມຈໍາເປັນຕ້ອງຮູ້ ດ້ານທຸລະກິດທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ.
- ຈໍາກັດການຕອບຄໍາຖາມການສໍາຫຼວດເກັບຂໍ້ມູນທາງການຕະຫຼາດຈາກພາຍນອກ ຍົກເວັ້ນພວກເຮົາໄດ້ຮັບອະນຸຍາດຢ່າງຖືກຕ້ອງ.
- ຮັບປະກັນວ່າພວກເຮົາມີການອະນຸຍາດທີ່ຈໍາເປັນກ່ອນການເປີດເຜີຍຂໍ້ມູນລັບໃດໜຶ່ງໃຫ້ກັບໃຜຜູ້ໜຶ່ງທີ່ຢູ່ນອກ HOYA.
- ເຝິກຝົນການຮັກສາຄວາມປອດໄພທີ່ດີດ້ານໄຊເບີ - ພວກເຮົາຈະ:
  - ປະຕິບັດຕາມກົດລະບຽບ, ນະໂຍບາຍ ແລະ ຂັ້ນຕອນຂອງພະແນກ IT ເພື່ອປ້ອງກັນການເຂົ້າເຖິງຂໍ້ມູນຂອງພວກເຮົາໂດຍບໍ່ໄດ້ຮັບອະນຸຍາດ.
  - ໃຊ້ ຮາດແວຣ໌, ຊອຟແວຣ໌ ແອບພລິເຄຊັນ ແລະ ອຸປະກອນເກັບຂໍ້ມູນທີ່ໄດ້ຮັບການອະນຸມັດຈາກ HOYA ເທົ່ານັ້ນ.
  - ມີສະຕິຕໍ່ການລັກຂໍ້ມູນ, ມາລແວຣ໌, ແຣນຊໍາແວຣ໌ ແລະ ຮູບແບບອື່ນຂອງການໂຈມຕີ ເຊິ່ງສາມາດເຮັດໃຫ້ລະບົບຂອງເຮົາຕົກຢູ່ໃນຄວາມສ່ຽງ.
- ລະມັດລະວັງເມື່ອໃຊ້ສື່ສັງຄົມອອນລາຍ - ພວກເຮົາຈະ:
  - ລະບຸຊັດເຈນວ່າທັດສະນະໃດໆທີ່ເຮົາໂພສ ໃນຖານະພະນັກງານຈະບໍ່ສະແດງທັດສະນະຂອງ HOYA.
  - ຫ້າມເປີດເຜີຍຂໍ້ມູນລັບກ່ຽວກັບກຸ່ມບໍລິສັດ, ລູກຄ້າ, ເພື່ອນຮ່ວມງານ ຫຼື ຄູ່ຮ່ວມທຸລະກິດຂອງພວກເຮົາ.
  - ຫ້າມໂພສສິ່ງທີ່ຈະປະກອບເຂົ້າໃນການຈໍາແນກ, ການຄຸກຄາມ ແລະ ການຂົ່ມເຫັງ.
- ຫຼີກເວັ້ນການໂອ້ລົມເລື່ອງຂໍ້ມູນລັບກັບຄອບຄົວ ຫຼື ໝູ່ເພື່ອນ ແລະ ໃນສະຖານທີ່ມີບຸກຄົນບໍ່ໄດ້ຮັບອະນຸຍາດອາດຈະສາມາດໄດ້ຍິນສິ່ງທີ່ກໍາລັງລົມກັນ (ເຊັ່ນ: ໃນລິຟ, ໃນຮ້ານອາຫານ ຫຼື ການຂົນສົ່ງສາທາລະນະ).
- ລາຍງານການໂຈລະກໍາ, ການສູນເສຍ ຫຼື ການເປີດເຜີຍຂໍ້ມູນລັບທີ່ບໍ່ໄດ້ຮັບອະນຸຍາດທັນທີ.
- ສົ່ງຄືນເອກະສານ ແລະ ສື່ທີ່ມີຂໍ້ມູນຂອງກຸ່ມບໍລິສັດເມື່ອພວກເຮົາອອກຈາກກຸ່ມບໍລິສັດ.






## "ຂໍ້ມູນດ້ານເຕັກນິກ" ແມ່ນຫຍັງ?

ຂໍ້ມູນ ແລະ ຄວາມຮູ້ ທີ່ເປັນກຳມະສິດຂອງ HOYA ແລະ ຍັງບໍ່ໄດ້ຮັບການປົກປ້ອງຈາກສິດທິບັດ. ລວມມີ:

- ການກໍ່ຕັ້ງການຄົ້ນຄວ້າ ແລະ ການພັດທະນາ R&D
- ເຕັກນິກການຜະລິດ
- ປັບປຸງດ້ານເຕັກໂນໂລຊີ

ພວກເຮົາບໍ່ເປີດເຜີຍຂໍ້ມູນເຫຼົ່ານີ້ອອກສູ່ສາທາລະນະ (ເຊັ່ນ: ໃນກອງປະຊຸມວິຊາການ ຫຼື ໃນເອກະສານເຕັກນິກວິຊາການ) ຍົກເວັ້ນມີເຫດຜົນດ້ານກົດໝາຍໃຫ້ເປີດເຜີຍ ແລະ ພວກເຮົາໄດ້ຮັບການອະນຸຍາດຈາກຫົວໜ້າຄຸມງານ ຫຼື ຜູ້ຈັດການລ່ວງໜ້າແລ້ວ.

## ທ່ານຈະເຮັດແນວໃດ?

**ໝູ່ຂອງທ່ານຄົນໜຶ່ງກຳລັງເລີ່ມທຸລະກິດໃໝ່ ແລະ ໄດ້ຂໍລາຍຊື່ລູກຄ້າຂອງ HOYA ຈາກທ່ານ ຜູ້ທີ່ອາດຈະສົນໃຈບໍລິການຂອງລາວ. ເອົາຂໍ້ມູນນີ້ໃຫ້ໝູ່ຂອງທ່ານໄດ້ບໍ່?**

ບໍ່. ລາຍຊື່ລູກຄ້າຂອງພວກເຮົາແມ່ນເປັນຄວາມລັບ ແລະ ບໍ່ຄວນແບ່ງໃຫ້ກັບໃຜ (ພາຍໃນ ຫຼື ພາຍນອກ HOYA) ຜູ້ທີ່ບໍ່ໄດ້ດຳເນີນທຸລະກິດຂອງ HOYA.








# ຊັບສິນຂອງກຸ່ມ HOYA

ພວກເຮົາເຂົ້າໃຈວ່າຊັບສິນຂອງກຸ່ມ HOYA ແມ່ນເພື່ອຈຸດປະສົງຂອງທຸລະກິດທີ່ກ່ຽວພັນກັບກຸ່ມ HOYA ແລະ ກໍແມ່ນຄວາມຮັບຜິດຊອບຂອງພວກເຮົາທີ່ຈະຮັບຮອງວ່າພວກເຮົາປ້ອງກັນຊັບສິນເຫຼົ່ານັ້ນຈາກການສູນເສຍ, ການໂຈລະກຳ ແລະ ການນຳໃຊ້ທີ່ບໍ່ເໝາະສົມ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ຮັບປະກັນວ່າຊັບສິນຂອງກຸ່ມບໍລິສັດແມ່ນຖືກນຳໃຊ້ເພື່ອທຸລະກິດທີ່ກ່ຽວຂ້ອງກັບກຸ່ມບໍລິສັດເທົ່ານັ້ນ ແລະ ການນຳໃຊ້ອື່ນຕ້ອງໄດ້ຮັບອະນຸຍາດຈາກຫົວໜ້າຄຸມງານ ຫຼື ຜູ້ຈັດການ.
- ຫ້າມນຳໃຊ້ທຶນຂອງກຸ່ມບໍລິສັດໃນທາງທີ່ຜິດ.
- ເກັບຮັກສາ ແລະ ຮັກສາບັນທຶກທີ່ກ່ຽວຂ້ອງການອຸປະກອນ ແລະ ເຄື່ອງໃນສາງຢ່າງຖືກຕ້ອງ.
- ຫ້າມເຄື່ອນຍ້າຍວັດຖຸດິບ, ເຄື່ອງໃນສາງ, ເຄື່ອງມືສົ່ງເສີມການຂາຍ ຫຼື ວັດຖຸເພື່ອການຜະລິດ ຫຼື ເອົາໄປຖິ້ມໂດຍບໍ່ໄດ້ຮັບອະນຸຍາດ.
- ລາຍງານອຸປະກອນທີ່ໄດ້ຮັບຄວາມເສຍຫາຍ, ບໍ່ປອດໄພ ຫຼື ຕ້ອງການການສ້ອມແປງ.
- ສົ່ງຄືນຊັບສິນຂອງກຸ່ມບໍລິສັດທີ່ເອົາໃຫ້ພວກເຮົາເວລາພວກເຮົາອອກຈາກກຸ່ມບໍລິສັດ.










## "ຊັບສິນຂອງ HOYA" ແມ່ນຫຍັງ?

ອາດຈະເປັນ:

- ເປັນຮູບປະທຳ ເຊັ່ນ: ອາຄານ, ພາຫະນະ, ເຟີນີເຈີ, ອຸປະກອນການຜະລິດ ແລະ ວັດສະດຸການຜະລິດ
- ການເງິນ ເຊັ່ນ: ເງິນທຶນຂອງກຸ່ມບໍລິສັດ ລວມມີ: ເຊັກ, ບັດເຄຣດິດ, ໃບແຈ້ງໜີ້ ແລະ ບັນທຶກອື່ນໆທີ່ມີມູນຄ່າເປັນເງິນ.
- ທາງເອເລັກໂທຣນິກ ເຊັ່ນ: ຄອມພິວເຕີ, ອຸປະກອນການສື່ສານ, ໂທລະສັບ, ລະບົບຂໍ້ມູນ, ການເຂົ້າໃຊ້ອິນເຕີເນັດ/ອິນທຣາເນັດ, ຜູ້ຊ່ວຍທາງດິຈິຕອນສ່ວນຕົວ ແລະ ອຸປະກອນອື່ນໆທີ່ຄ້າຍຄືກັນ, ລະບົບ ແລະ ເຕັກໂນໂລຊີ.

ຂໍ້ມູນກໍແມ່ນຊັບສິນທີ່ມີຄ່າຂອງກຸ່ມບໍລິສັດເຊັ່ນກັນ. ເບິ່ງໃນພາກ ຂໍ້ມູນຂອງ ກຸ່ມ HOYA ສຳລັບລາຍລະອຽດເພີ່ມຕື່ມ.

## ທ່ານຈະເຮັດແນວໃດ?

**ທ່ານຫາກໍໄດ້ຮັບຄອມພິວເຕີໜ່ວຍໃໝ່ ເຊິ່ງເປັນສ່ວນໜຶ່ງຂອງຂັ້ນຕອນການປັບປຸງເຕັກໂນໂລຊີຂອງບໍລິສັດ. ທ່ານສາມາດເອົາຄອມພິວເຕີໜ່ວຍເກົ່າຂອງທ່ານໃຫ້ລູກສາວຂອງທ່ານໄດ້ບໍ່?**

ບໍ່. ເຖິງວ່າຄອມພິວເຕີໜ່ວຍເກົ່າຂອງທ່ານບໍ່ໄດ້ໃຊ້ແລ້ວ, ຕ້ອງສົ່ງຄືນໃຫ້ບໍລິສັດເພື່ອການຈັດການທີ່ເໝາະສົມ.





# ການຄ້າພາຍໃນ

ພວກເຮົາເຄົາລົບກົດໝາຍການຄ້າພາຍໃນຂອງທຸກໆແຫ່ງທີ່ພວກເຮົາເຮັດທຸລະກິດ.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ຮັບຮູ້ປະເພດຂໍ້ມູນທີ່ຖືວ່າເປັນ "ຂໍ້ມູນພາຍໃນ" ແລະ ຈະບໍ່ໃຊ້ຂໍ້ມູນດັ່ງກ່າວເປັນພື້ນຖານໃນການຕັດສິນໃຈກ່ຽວກັບການຊື້ ຫຼື ຂາຍ ຮຸ້ນ, ພັດທະບັດ, ຕົວເລືອກ ຫຼື ຫຼັກຊັບອື່ນໆຂອງກຸ່ມ HOYA ຫຼື ບໍລິສັດມະຫາຊົນອື່ນໆ ຍົກເວັ້ນ ແລະ ຈົນກວ່າວ່າຂໍ້ມູນຈະຖືກເຜີຍແຜ່ຕໍ່ສາທາລະນະ.
- ຫ້າມສົ່ງຕໍ່ "ຂໍ້ມູນພາຍໃນ" ໃຫ້ຄົນອື່ນ ເຊັ່ນ: ໝູ່ເພື່ອນ ແລະ ຄອບຄົວ, ເພື່ອໃຫ້ພວກເຂົາສວຍໂອກາດນຳໃຊ້ຂໍ້ມູນ.
- ຫຼັງຈາກອອກຈາກ HOYA ແລ້ວ, ໃຫ້ຢຸດການຊື້ຂາຍໂດຍໃຊ້ຂໍ້ມູນພາຍໃນ ຈົນກວ່າຂໍ້ມູນຖືກເປີດເຜີຍສູ່ສາທາລະນະ.







## “ຂໍ້ມູນພາຍໃນ” ແມ່ນຫຍັງ?

ຂໍ້ມູນທີ່ນັກລົງທຶນເຫັນວ່າມີປະໂຫຍດໃນການກຳນົດວ່າຈະທຳການຊື້ຂາຍຮຸ້ນຂອງກຸ່ມບໍລິສັດ ຫຼື ຫຼັກຊັບອື່ນ ຫຼືບໍ່. ຕົວຢ່າງລວມມີ:

- ຜົນຮັບດ້ານການເງິນຂອງກຸ່ມບໍລິສັດ
- ການຄາດຄະເນຜົນຮັບດ້ານການເງິນໃນອະນາຄົດ
- ຂ່າວກ່ຽວກັບການລໍຖ້າການດຳເນີນການ ຫຼື ການສະເໜີເຂົ້າເປັນບໍລິສັດໃນເຄືອ, ການຮວມບໍລິສັດ ຫຼື ການຊື້ຊັບສິນ
- ສັນຍາໃໝ່ ຫຼື ການຍົກເລີກສັນຍາ
- ຂໍ້ມູນກ່ຽວກັບການດຳເນີນຄະດີທີ່ກ່ຽວຂ້ອງກັບກຸ່ມບໍລິສັດ
- ການປ່ຽນແປງໃນນະໂຍບາຍການຈ່າຍເງິນປັນຜົນ
- ການປ່ຽນແປງຜູ້ບໍລິຫານລະດັບສູງ

## ທ່ານຈະເຮັດແນວໃດ?

**ຜູ້ສະໜອງບອກຂ້າພະເຈົ້າວ່າມີຜະລິດຕະພັນໃໝ່ຢ່າງລັບໆ. ພວກເຮົາບໍ່ສາມາດໃຊ້ຜະລິດຕະພັນ, ແຕ່ຂ້າພະເຈົ້າຄິດວ່າມັນເປັນຄວາມເປັນໄປໄດ້ແທ້ຈິງ ແລະ ຄິດວ່າຮຸ້ນໃນບໍລິສັດຂອງຜູ້ສະໜອງຈະເພີ່ມຂຶ້ນຢ່າງວ່ອງໄວ. ຂ້າພະເຈົ້າຊື້ຮຸ້ນໃນບໍລິສັດໄດ້ບໍ່?**

ບໍ່. ທ່ານບໍ່ສາມາດຊື້ຮຸ້ນຂອງຜູ້ສະໜອງ ຈົນກວ່າຂໍ້ມູນຈະຖືກເປີດເຜີຍສູ່ສາທາລະນະ. ຂໍ້ມູນນີ້ແມ່ນ “ຂໍ້ມູນພາຍໃນ” ເຊິ່ງເອົາໃຫ້ທ່ານຢ່າງລັບໆ. ການຊື້ຂາຍໂດຍອາໄສຂໍ້ມູນນັ້ນ (ຫຼື ການໃຫ້ເຄັດລັບຄົນອື່ນເພື່ອໃຫ້ພວກເຂົາຊື້ຂາຍໄດ້) ເປັນການລະເມີດນະໂຍບາຍຂອງພວກເຮົາ ແລະ ກົດໝາຍ.








# ການສື່ສານທີ່ມີຄວາມຮັບຜິດຊອບ

ພວກເຮົາກຳນົດສູນກາງການຕິດຕໍ່ ໂດຍຜູ້ທີ່ສາມາດເວົ້າດ້ວຍສຽງທີ່ແຈ້ງ ແລະ ສະໝໍ່າສະເໝີເມື່ອໃຫ້ຂໍ້ມູນແກ່ມະຫາຊົນ ແລະ ສື່.

## ພວກເຮົາມຸ່ງໝັ້ນທີ່ຈະ:

- ບໍ່ໃຫ້ມີຄວາມຮູ້ສຶກວ່າພວກເຮົາ, ໃນຖານະພະນັກງານຄົນໜຶ່ງ, ກຳລັງເວົ້າໃນນາມຂອງ HOYA ໃນການສື່ສານໃດໜຶ່ງ ເຊິ່ງອາດຈະຖືກເປີດເຜີຍຕໍ່ສາທາລະນະ, ຍົກເວັ້ນວ່າພວກເຮົາໄດ້ຮັບຄຳສັ່ງຈາກກຸ່ມ HOYA ໃຫ້ເຮັດແບບນັ້ນ.
- ສົ່ງຕໍ່ຜູ້ຕິດຕໍ່ ແລະ ການຂໍຂໍ້ມູນຈາກພາຍນອກທັງໝົດໃຫ້ກັບແຫຼ່ງຂໍ້ມູນທີ່ເໝາະສົມພາຍໃນ HOYA.
  - ຖ້າພວກເຮົາຖືກຕິດຕໍ່ຈາກສຳນັກຂ່າວ ຫຼື ນັກວິເຄາະການເງິນ, ໃຫ້ແຈ້ງໃຫ້ຫົວໜ້າຄຸມງານ ຫຼື ຜູ້ຈັດການທັນທີ, ຫຼື IR ຂອງກຸ່ມບໍລິສັດ.
  - ຖ້າພວກເຮົາຖືກຕິດຕໍ່ຈາກເຈົ້າໜ້າທີ່ຕຳຫຼວດ ຫຼື ເຈົ້າໜ້າທີ່ກວດສອບ ຫຼື ແຈ້ງການການບັງຄັບໃຊ້ກົດໝາຍ, ພວກເຮົາຕ້ອງແຈ້ງໃຫ້ພະແນກກົດໝາຍ ຫຼື ພະແນກປະຕິບັດຕາມກົດລະບຽບ ທັນທີ.
- ຮັບອະນຸມັດຈາກຫົວໜ້າຄຸມງານ ຫຼື ຜູ້ຈັດການກ່ອນການຮັບເອົາການເຊື້ອເຊີນກ່າວຄຳປາໄສ ຫຼື ຂຽນບົດຄວາມທີ່ມີຫົວຂໍ້ກ່ຽວກັບບໍລິສັດ ຫຼື ວຽກຂອງພວກເຮົາທີ່ກຸ່ມ HOYA.



### ທ່ານຈະເຮັດແນວໃດ?

**ທ່ານໄດ້ຮັບອີເມວ ຂໍໃຫ້ທ່ານເຂົ້າຮ່ວມໃນການສຳຫຼວດການຕະຫຼາດ ແລະ ໃຫ້ຕອບຄຳຖາມທົ່ວໄປກ່ຽວກັບກຸ່ມບໍລິສັດ. ພວກເຮົາສະເໜີຄ່າຕອບແທນສຳລັບເວລາຂອງທ່ານ ຫຼື ສະເໜີບໍລິຈາກໃຫ້ການກຸສົນທີ່ທ່ານເລືອກ. ທ່ານສາມາດເຂົ້າຮ່ວມການສຳຫຼວດ ໂດຍບໍ່ໄດ້ປຶກສາກັບຫົວໜ້າຄຸມງານ ຫຼື ຜູ້ຈັດການໄດ້ບໍ່?**

ບໍ່. ເປັນສິ່ງສຳຄັນທີ່ຕ້ອງຢັ້ງຢືນຄວາມເຊື່ອຖືໄດ້ຂອງຄຳຮ້ອງຂໍທາງອີເມວທີ່ບໍ່ເປັນທາງການແບບນີ້ (ຫຼື ໂທລະສັບ) ທີ່ຊອກຫາຂໍ້ມູນກ່ຽວກັບ HOYA ຫຼື ບໍລິສັດ HOYA ທັງໝົດ ຍ້ອນວ່າພວກເຂົາອາດຈະມີເຈດຕະນາທີ່ບໍ່ເໝາະສົມເພື່ອໃຫ້ໄດ້ຂໍ້ມູນດ້ານການແຂ່ງຂັນ ຫຼື ການຕະຫຼາດ. ພວກເຮົາຍັງຕ້ອງເອົາໃຈໃສ່ໃນການຮັບປະກັນວ່າ ຄຳຮ້ອງຂໍທາງອີເມວແບບນີ້ຈະບໍ່ແມ່ນ "ການໂຈລະກຳ" ຫຼື ຄວາມພະຍາຍາມທີ່ເປັນອັນຕະລາຍ ເພື່ອສົ່ງໄວຣັສອັນຕະລາຍເຂົ້າໃນເຄືອຂ່າຍຄອມພິວເຕີ. ທ່ານຕ້ອງປຶກສາກັບຫົວໜ້າຄຸມງານ ຫຼື ຜູ້ຈັດການ ແລະ ພະແນກ IT ກ່ອນເປີດລິ້ງໃນອີເມວ ຫຼື ໃຫ້ຄຳຕອບຕໍ່ການຂໍຂໍ້ມູນປະເພດນີ້.









# ເອກະສານຊ້ອນທ້າຍ

## ແບບຟອມຢັ້ງຢືນຫຼັກຈັນຍາບັນຂອງກຸ່ມ HOYA
(ສຳລັບພະນັກງານ)

**1.** ຂ້າພະເຈົ້າໄດ້ຮັບສຳເນົາຫຼັກຈັນຍາບັນຂອງກຸ່ມ HOYA (ຫຼື ໄດ້ເຂົ້າເຖິງສຳເນົາໃນອິນຕຼາເນັດຂອງ ກຸ່ມ HOYA ຫຼື ອິນຕຣາເນັດ HOYA ໃນພະແນກຂອງຂ້າພະເຈົ້າ).

**2.** ຂ້າພະເຈົ້າໄດ້ອ່ານ ແລະ ເຂົ້າໃຈ ຫຼັກຈັນຍາບັນຂອງກຸ່ມ HOYA.

**3.** ຂ້າພະເຈົ້າຈະປະຕິບັດຕາມ ແລະ ເຄົາລົບຫຼັກຈັນຍາບັນຂອງກຸ່ມ HOYA, ປະຕິບັດຕາມກົດໝາຍ ແລະ ນະໂຍບາຍທັງໝົດຂອງກຸ່ມບໍລິສັດ.

ລາຍເຊັນພະນັກງານ

ວັນທີ

ເລກທີປະຈຳຕົວ

ທີ່ຕັ້ງ ແລະ ອົງກອນຂອງ HOYA

# ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ